# ຜູ້ແທນປະຊາຊົນ
# PHOUTHEN PASAXON

17-20 ທັນວາ 2021
ປີທີ 10
ສະບັບທີ 804

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເດີ່ນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com


## ປະທານສະພາແຫ່ງຊາດລາວ ເຂົ້າຢ້ຽມຂ່ຳນັບ ເລຂາທິການໃຫຍ່ຄະນະບໍລິຫານງານ ພັກກອມມູນິດຫວຽດນາມ



(ສພຊ) ໃນໂອກາດທີ່ຢ້ຽມຢາມສັນຖະວະໄມຕີ ສສ.ຫວຽດນາມ ຂອງຄະນະຜູ້ແທນຂັ້ນສູງ ສະພາແຫ່ງຊາດ ແຫ່ງ ສປປລາວ ວັນທີ 7 ທັນວາ 2021 ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ວາງພວງມາລາ ທີ່ສຸສານ ປະທານ ໂຮ່ ຈິ ມິ່ງ, ນະຄອນຫລວງຮ່າ ໂນ້ຍ; ຈາກນັ້ນ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ຫງວຽນ ຟູ ຈ້ອງ ເລຂາທິການໃຫຍ່ຄະນະບໍລິຫານງານພັກກອມມູນິດຫວຽດນາມ ເຊິ່ງສະຫາຍໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ອວຍພອນໃຫ້ການຢ້ຽມຢາມສັນຖະວະໄມຕີ ສສ.ຫວຽດນາມ

ອ່ານຕໍ່ໜ້າ 2

## ຜົນສຳເລັດກອງປະຊຸມຄົບຄະນະ ກວທສ ປະຈຳປີ 2021

(ສພຊ) ວັນທີ 14 ທັນວາ 2020 ທີ່ສະພາແຫ່ງຊາດ, ກອງປະຊຸມຄົບຄະນະກຳມາທິການວັດທະນະທຳ-ສັງຄົມ (ກວທສ) ປະຈຳປີ 2021 ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ດ້ວຍບັນຍາກາດອັນຟົດຟື້ນ ແລະ ເຕັມໄປດ້ວຍຄວາມຮັບຜິດຊອບສູງຂອງບັນດາທ່ານຜູ້ແທນກອງປະຊຸມ ທີ່ໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ດ້ວຍເຫດ ແລະ ຜົນຕໍ່ບັນດາເນື້ອໃນທີ່ນຳມາສະເໜີໃນກອງປະຊຸມຄັ້ງນີ້ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານ ກວທສ; ເຂົ້າຮ່ວມມີທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ ຈາກບັນດາຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ,



ປະທານ-ຮອງປະທານກຳມາທິການ, ເລຂາທິການສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງ ກວທສ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ຜູ້ແທນກອງປະຊຸມ ໄດ້ມີຄວາມເປັນເອກະພາບສູງຕໍ່ການສະຫລຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2021, ທິດທາງແຜນການວຽກງານຈຸດສຸມປະຈຳປີ 2022, ແຜນການສ້າງຄວາມເຂັ້ມແຂງໃຫ້ ກວທສ ໃນຊຸມປີຕໍ່ໜ້າ; ໃນກອງປະຊຸມຄັ້ງນີ້ ຍັງໄດ້ຮັບຟັງການລາຍງານກ່ຽວກັບການຕີລາຄາຄືນການຈັດຕັ້ງປະຕິບັດນິຕິກຳຜ່ານມາ ແລະ ບັນດາມາດຕະການຕໍ່ໜ້າ

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນສະພາແຫ່ງຊາດລາວ ເຂົ້າຮ່ວມ ກອງປະຊຸມປະຈຳປີ ຂອງເວທີປຶກສາຫາລື APPF




(ສພຊ) ລະຫວ່າງວັນທີ 13-15 ທັນວາ 2021, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີຂອງເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (Asia-Pacific Parliamentary Forum (APPF)) ຄັ້ງທີ 29, ໃນຮູບແບບທາງໄກ ໂດຍແມ່ນ ສ.ເກົາຫລີ ເປັນເຈົ້າພາບ ໂດຍການເປັນປະທານຂອງທ່ານ ປັກ ບົຍ່ອງ ຊຶງ ປະທານສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ເຊິ່ງມີຄະນະຜູ້ແທນ ຈຳນວນ 111 ທ່ານ ທີ່ມາຈາກ 20 ປະເທດໃນພາກພື້ນອາຊີ-ປາຊີຟິກເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນຄວາມຄິດຄວາມເຫັນພາຍໃຕ້ຫົວຂໍ້: "ບົດບາດຂອງລັດຖະສະພາໃນການເພີ່ມທະວີຄວາມຢືດຢຸ່ນໃນຍຸກຫລັງໂຄວິດ-19" ໂດຍໄດ້ລົງເລິກປຶກສາຫາລືກັນກ່ຽວກັບບັນຫາການເມືອງ ແລະ ຄວາມໝັ້ນຄົງ, ເສດຖະກິດ ແລະ ການຄ້າ ແລະ ການຮ່ວມມືໃນພາກພື້ນອາຊີ-ປາຊີຟິກ ຕາມພາລະບົດບາດຂອງອົງການນິຕິບັນຍັດ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ທ່ານ ສັນຍາ ປຣະເສີດ ຫົວໜ້າຄະນະຜູ້ແທນລາວ ໄດ້ມີຄຳເຫັນຕໍ່ບັນຫາການເມືອງ ແລະ ຄວາມໝັ້ນຄົງ ໃນພາກພື້ນອາຊີ-ປາຊີຟິກ ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍຫລາຍດ້ານ ທີ່ສົ່ງຜົນກະທົບຕໍ່ສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ກໍຄືໃນໂລກ ເປັນຕົ້ນແມ່ນການແຜ່ລະບາດຂອງພະຍາດໂຄວິດ-19, ໄພພິບັດທາງທຳມະຊາດ, ການກໍ່ການຮ້າຍ ແລະ ບັນຫາອື່ນໆ. ພ້ອມດຽວກັນນັ້ນ, ທ່ານກໍໄດ້ຍົກໃຫ້ເຫັນເຖິງນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຂອງ ສປປລາວ ແລະ ບົດບາດຂອງສະພາແຫ່ງຊາດລາວ ໃນນາມເປັນຕົວແທນແຫ່ງສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າ ເຊິ່ງເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ. ສະພາແຫ່ງຊາດລາວ ໄດ້ມີການຄົ້ນຄວ້າພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບການຕ້ານອາຊະຍາກຳຂ້າມຊາດ, ການຄ້າມະນຸດ, ການຕ້ານການກໍ່ການຮ້າຍ, ການຕ້ານ ແລະ ສະກັດກັ້ນອາດຊະຍາກຳທາງຄອມພິວເຕີ, ການເກືອດຫ້າມອາວຸດນິວເຄຣຍ ແລະ ອື່ນໆ ເຊິ່ງໄດ້ປະກອບສ່ວນອັນສຳຄັນໃນການເສີມສ້າງສັນຕິພາບ, ຄວາມໝັ້ນຄົງ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງໃນພາກພື້ນ ແລະ ໃນໂລກ.

ທ່ານຍັງໄດ້ຮຽກຮ້ອງໃຫ້ບັນດາສະມາຊິກລັດຖະສະພາໃນພາກພື້ນອາຊີ-ປາຊີຟິກ ສືບຕໍ່ຮ່ວມມືກັນ ແລະ ເພີ່ມທະວີບົດບາດການເປັນຜູ້ນຳຂອງອົງການນິຕິບັນຍັດ ເຂົ້າໃນພາລະກິດເສີມສ້າງສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນ,

ອ່ານຕໍ່ໜ້າ 2

## ຮອງປະທານ ກສຕສ ເຄື່ອນໄຫວຕິດຕາມ, ກວດກາ ຢູ່ແຂວງຄຳມ່ວນ



(ສພຊ) ລະຫວ່າງວັນທີ 6-7 ທັນວາ 2021 ທ່ານ ຄຳມ່ວນ ຊົມສີຫາປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ, ກວດກາ ຢູ່ແຂວງຄຳມ່ວນ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຕິດຕາມກວດກາໃນຄັ້ງນີ້ມີທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງ (ສພຂ) ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ອົງການປົກຄອງແຂວງ, ບັນດາຫົວໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງ.

ຈຸດປະສົງຂອງການເຄື່ອນໄຫວຄັ້ງນີ້ ແມ່ນເພື່ອເກັບກຳຂໍ້ມູນພື້ນຖານ, ຮັບຟັງຄວາມຄິດເຫັນຂອງການນຳແຂວງ, ເມືອງ ແລະ ປະຊາຊົນ ກ່ຽວກັບບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເປັນຕົ້ນ ອຸທິຍານແຫ່ງຊາດພູຫີນໜາມໜໍ່, ແຫລ່ງນ້ຳ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ທີ່ອາດຈະເກີດຂຶ້ນຈາກການພັດທະນາໂຄງການໄຟຟ້າຄວາມຮ້ອນຖ່ານຫີນ, ເພື່ອເປັນຂໍ້ມູນພື້ນຖານສຳຄັນໃຫ້ແກ່ກຳມາທິການ ໃນການຄົ້ນຄວ້າ ໜັງສືສະເໜີ ຂອງລັດຖະບານ ສະບັບເລກທີ 57/ນຍ, ລົງວັນທີ 15 ມິຖຸນາ 2021 ກ່ຽວກັບການຮັບຮອງ ແລະ ພິຈາລະນາຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ທີ່ພົວພັນກັບໂຄງການໄຟຟ້າຄວາມຮ້ອນຖ່ານຫີນ ບົວລະພາ ເມືອງບົວລະພາ ແຂວງຄຳມ່ວນ.

ໂອກາດເຄື່ອນໄຫວຄັ້ງນີ້, ຄະນະ ໄດ້ຮັບຟັງການລາຍງານຂອງບັນດາພະແນກການທີ່ກ່ຽວຂ້ອງຄື: ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກແຜນການ ແລະ

ອ່ານຕໍ່ໜ້າ 2

## ຄະນະ...

ສ້າງຄວາມໄວ້ເນື້ອເຊື່ອໃຈ, ຮ່ວມມື ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນ ເພື່ອຮັບມືກັບສິ່ງທ້າທາຍ ແລະ ແກ້ໄຂບັນຫາຕ່າງຂອງພາກພື້ນ ແລະ ສາກົນດ້ວຍການເຈລະຈາ ແລະ ສັນຕິວິທີ. ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມກອງປະຊຸມກ່ຽວກັບຂົງເຂດເສດຖະກິດ-ການຄ້າ ແລະ ການຮ່ວມມືໃນພາກພື້ນອາຊີ-ປາຊີຟິກ ໂດຍໄດ້ຍົກໃຫ້ເຫັນເຖິງນະໂຍບາຍການຟື້ນຟູເສດຖະກິດ ໃນຍຸກໂຄວິດ-19 ຂອງ ສປປລາວ ເຊິ່ງໄດ້ເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຮັບຮອງເອົາຍຸດທະສາດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ 2021-2030 ແລະ ແຜນພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ 2021-2025 ພ້ອມທັງຊຸກຍູ້ສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ການເປີດນຳໃຊ້ທາງລົດໄຟຄວາມໄວສູງລາວ-ຈີນ ແລະ ການຫັນສັງຄົມເຂົ້າສູ່ວິຖີການໃຊ້ຊີວິດປົກກະຕິແບບໃໝ່. ພ້ອມນີ້, ຍັງໄດ້ເນັ້ນກ່ຽວກັບການຮ່ວມມືທາງດ້ານເສດຖະກິດ-ການຄ້າ ການລົງທຶນໃນ ສປປລາວ ແລະ ຮຽກຮ້ອງໃຫ້ບັນດາລັດຖະສະພາສະມາຊິກ APPF ຊຸກຍູ້ການລົງທຶນໃນການຜະລິດພະລັງງານສະອາດ, ການຜະລິດສະບຽງອາຫານ ເພື່ອຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນ ແລະ ພ້ອມກັນບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໃນຕໍ່ໜ້າ.

ໃນຕອນທ້າຍຂອງກອງປະຊຸມ ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາມະຕິທີ່ປິ່ນອ້ອມຫົວຂໍ້ຕ່າງໆກອງປະຊຸມ ຈຳນວນ 13 ສະບັບ ພ້ອມທັງພິຈາລະນາຮັບຮອງເອົາຖະແຫລງການຮ່ວມຂອງກອງປະຊຸມ APPF ຄັ້ງທີ 29 ແລະ ຕົກລົງເຫັນດີໃຫ້ລັດຖະສະພາ ແຫ່ງຣາຊະອານາຈັກໄທ ເປັນເຈົ້າພາບຈັດກອງປະຊຸມ APPF ຄັ້ງທີ 30 ໃນປີ 2022.

(ສອນສັກ ວັນວິໄຊ)



## ຮອງປະທານ...

ການລົງທຶນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ກ່ຽວກັບຂໍ້ມູນຂອງໂຄງການພະລັງງານໄຟຟ້າຄວາມຮ້ອນຖ່ານຫີນເປັນຕົ້ນ: ຈຸດທີ່ຕັ້ງຂອງໂຄງການ, ອາຍຸສຳປະທານ, ມູນຄ່າຂອງໂຄງການ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ-ທຳມະຊາດ ແລະ ອຸທິຍານແຫ່ງຊາດພູຫີນໜາມໜໍ່ ທີ່ກຳລັງກະກຽມສະເໜີເປັນມໍລະດົກໂລກທາງດ້ານທຳມະຊາດ ເຊິ່ງໄດ້ຍົກໃຫ້ເຫັນດ້ານຄວາມເໝາະສົມ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການສ້າງ ແລະ ການປະເມີນເບື້ອງຕົ້ນຂອງໂຄງການດັ່ງກ່າວ ພາຍຫລັງໄດ້ຮັບຟັງການລາຍງານແລ້ວ ທ່ານຮອງປະທານ ກສຕສ ພ້ອມດ້ວຍຄະນະ ກໍໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ມີບາງຄຳຖາມເຈາະຈີ້ມຕໍ່ພະແນກການທີ່ເຂົ້າຮ່ວມຢ່າງກົງໄປ-ກົງມາ ເພື່ອເປັນຂໍ້ມູນອັນຄົບຖ້ວນຮອບດ້ານແບບພາວະວິໄສ; ຈາກນັ້ນ, ຄະນະ ໄດ້ສືບຕໍ່ເຮັດວຽກຢູ່ພາກສະໜາມເຂດສຳປະທານຈຸດສຸມບ້ານຫລັງຄັງ ເມືອງບົວລະພາ ແຂວງຄຳມ່ວນ ເຊິ່ງໄດ້ຮັບຟັງການລາຍງານຂອງຂະແໜງການທີ່ກ່ຽວຂ້ອງກ່ຽວກັບໂຄງການດັ່ງກ່າວ ໄດ້ສະເໜີການປະເມີນຄວາມເໝາະສົມໃນການສ້າງໂຄງການພະລັງງານໄຟຟ້າຄວາມຮ້ອນຖ່ານຫີນ.

ທ່ານ ຄຳມ່ວນ ຊົມສີຫາປັນຍາ ໄດ້ມີຄຳເຫັນໂອ້ລົມ ແລະ ກ່າວສະແດງຄວາມຊົມເຊີຍຕໍ່ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ທີ່ໄດ້ສະໜອງຂໍ້ມູນຮອບດ້ານ ໃຫ້ຄະນະທີ່ເຄື່ອນໄຫວຕິດຕາມກວດກາໃນຄັ້ງນີ້ ເຊິ່ງເປັນຂໍ້ມູນພື້ນຖານອັນລະອຽດທີ່ຈະນຳໄປສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນ ສະພາແຫ່ງຊາດ ຊຸດທີ IX ໃນຕໍ່ໜ້າໃຫ້ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

(ເອື້ອ ມະໂນສິງ)

## ຜົນສຳເລັດ...

ເພື່ອຕອບໂຕ້ກັບພະຍາດໂຄວິດ-19 ຈາກ 18 ເຂດເລືອກຕັ້ງ ແລະ ບັນດາກະຊວງ, ອົງການທີ່ກ່ຽວຂ້ອງຂັ້ນສູນກາງ ແນໃສ່ເພື່ອໃຫ້ບັນລຸຄາດໝາຍທີ່ວ່າ: ໃຫ້ມີຜູ້ຕິດເຊື້ອໜ້ອຍທີ່ສຸດ, ເສຍຊີວິດໜ້ອຍທີ່ສຸດ ແລະ ເພື່ອໃຫ້ທຸກຄົນໃນສັງຄົມໄດ້ກັບຄືນມາດຳລົງຊີວິດປົກກະຕິ, ເສດຖະກິດ-ສັງຄົມໄດ້ຮັບການຟື້ນຟູກັບສູ່ສະພາບປົກກະຕິໂດຍໄວ. ພ້ອມກັນນັ້ນ, ການຄົ້ນຄວ້າປະກອບຄວາມເຫັນຂອງບັນດາຜູ້ແທນກອງປະຊຸມ ໄດ້ເປັນການຢັ້ງຢືນເຖິງດ້ານດີ, ຜົນສຳເລັດທີ່ກຳມາທິການ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກວທສ ຍາດມາໄດ້ໃນໄລຍະ 1 ປີຜ່ານມາ, ພ້ອມນັ້ນ ກໍໃຫ້ເຫັນຈຸດອ່ອນຂໍ້ຄົງຄ້າງ ເພື່ອປັບປຸງແກ້ໄຂໃນຕໍ່ໜ້າ. ກອງປະຊຸມໄດ້ຕີລາຄາສູງຕໍ່ທຸກຄຳເຫັນທີ່ເປັນປະໂຫຍດຂອງບັນດາທ່ານຜູ້ແທນ ເພື່ອເປັນພື້ນຖານໃຫ້ກຳມາທິການນຳໄປຄົ້ນຄວ້າປັບປຸງບົດຕ່າງໆໃຫ້ມີເນື້ອໃນເລິກເຊິ່ງ, ຄົບຖ້ວນສົມບູນ ເພື່ອໃຫ້ກຳມາທິການ ກໍຄືສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການ ສາມາດປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ໃຫ້ມີຜົນສຳເລັດດ້ວຍຄຸນນະພາບສູງ.

ໃນກອງປະຊຸມ, ທ່ານນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ເພື່ອໃຫ້ບັນດາທ່ານໄດ້ສືບຕໍ່ນຳໄປຄົ້ນຄວ້າຄຶດຫງໍາ ແລະ ຜັນຂະຫຍາຍເຂົ້າໃນການຊີ້ນຳ-ນຳພາຂອງບັນດາທ່ານ ໃນການຈັດຕັ້ງປະຕິບັດວຽກງານຂອງກຳມາທິການ ດັ່ງນີ້: ເອົາໃຈໃສ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເປັນເຈົ້າການປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນການສ້າງ ແລະ ປັບປຸງນິຕິກຳເລີ່ມແຕ່ຕົ້ນປີ ພ້ອມທັງຄົ້ນຄວ້າປັບປຸງແບບແຜນ, ວິທີການໃນການເຂົ້າຮ່ວມແຕ່ຫົວທີໃນການສ້າງ-ປັບປຸງກົດໝາຍ, ວິທີການນຳເອົາຮ່າງກົດໝາຍໄປທາບທາມຄຳຄິດຄຳເຫັນຢູ່ສູນກາງ, ທ້ອງຖິ່ນໃຫ້ກວ້າງຂວາງ ລວມທັງຄວາມເປັນເຈົ້າການຂອງຄະນະກຳມະການຂອງກຳມາທິການປະຈຳຢູ່ເຂດເລືອກຕັ້ງ ໃນການປະສານສົມທົບ ເພື່ອຈັດຕັ້ງການທາບທາມຄຳຄິດຄຳເຫັນຕໍ່ຮ່າງກົດໝາຍ, ການສະຫລຸບສັງລວມຄຳເຫັນຢູ່ເຂດເລືອກຕັ້ງຂອງຕົນສິ່ງໃຫ້ຄະນະຮັບຜິດຊອບຮ່າງກົດໝາຍ ເພື່ອປັບປຸງໃຫ້ທັນກັບກຳນົດເວລາ; ເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ, ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນໃຫ້ແໜ້ນແຟ້ນ, ຕິດຕາມເກັບກຳຂໍ້ມູນ, ລົງເລິກການວິເຄາະວິໄຈບັນຫາຕົວຈິງໃຫ້ເລິກເຊິ່ງ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ບັນດາມະຕິຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາແຫ່ງຊາດ ເພື່ອສະໜອງຂໍ້ມູນທີ່ມີຄຸນນະພາບ, ທັນເວລາໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ເພື່ອຄົ້ນຄວ້າພິຈາລະນາບັນຫາສຳຄັນຂອງປະເທດຊາດ, ມີກົນໄກປະສານສົມທົບກັບລັດຖະບານ, ຂະແໜງການທີ່ກ່ຽວຂ້ອງ ແກ້ໄຂບັນຫາຢ່າງຖືກຕ້ອງ ແລະ ມີປະສິດທິຜົນ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດໝາຍມີຄວາມເຂັ້ມງວດເທື່ອລະກ້າວ; ສະເໜີໃຫ້ກຳມາທິການ, ກຳມະການຂອງກຳມາທິການ ປະຈຳຢູ່ເຂດເລືອກຕັ້ງເປັນເຈົ້າການຜັນຂະຫຍາຍແຜນຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ, ແຜນຕິດຕາມກວດກາຂອງກຳມາທິການ ເປັນແຜນການຕິດຕາມກວດກາຂອງຕົນ ໂດຍຮ່ວມກັບບັນດາກຳມາທິການຂອງສະພາແຫ່ງຊາດ, ຂະແໜງການທີ່ກ່ຽວຂ້ອງ ລົງຕິດຕາມກວດກາ ຕາມແຜນການ ແລະ ເພີ່ມທະວີການຕິດຕາມກວດກາບັນຫາທີ່ເຄັ່ງຮ້ອນ ຮີບດ່ວນ ຈຳເປັນ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ສຸຂະພາບ ແລະ ການດຳລົງຊີວິດໃນສັງຄົມ ເປັນຕົ້ນ: ການຈັດຕັ້ງຜັນຂະຫຍາຍຄຳສັ່ງ, ຄຳແນະນຳຂອງພັກ, ມະຕິຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ບັນດາມາດຕະການແກ້ໄຂທີ່ລັດຖະບານ ກໍຄືອົງການປົກຄອງທ້ອງຖິ່ນວາງອອກ ໃຫ້ຕໍ່ເນື່ອງ ມີຈຸດສຸມ ເປັນຕົ້ນ: ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19, ຈັນຍາບັນ ຈັນຍາທຳຂອງແພດ, ຄຸນນະພາບຂອງການປິ່ນປົວ, ການນຳໃຊ້ບັດປະກັນສັງຄົມເຂົ້າໃນການປິ່ນປົວຄົນເຈັບໃຫ້ເໝາະສົມ ແລະ ມີຄວາມຍຸຕິທຳ, ຄວາມພ້ອມ ແລະ ຄວາມປອດໄພໃນການເປີດການທ່ອງທ່ຽວສີຂຽວ, ຄຸນນະພາບຂອງການຮຽນ-ການສອນ ເວົ້າລວມ, ເວົ້າສະເພາະແມ່ນຮູບແບບທາງໄກ, ການແກ້ໄຂການວ່າງງານ, ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານດີເດັ່ນ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ 1954 ຄືນຫລັງ ແລະ ອື່ນໆ; ສະເໜີໃຫ້ກຳມາທິການ ຈັດຕັ້ງການເຝິກອົບຮົມ ເພື່ອຍົກລະດັບຂີດຄວາມສາມາດໃນການປະຕິບັດພາລະບົດບາດຂອງກຳມາທິການໃຫ້ແກ່ກຳມະການຂອງຕົນ, ພ້ອມກັນນີ້ ສະເໜີໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດເປັນເຈົ້າການໃນການຄົ້ນຄວ້າບົດຮຽນການເຄື່ອນໄຫວທີ່ດີຂອງກຳມາທິການດ້ວຍຮູບການຕ່າງໆ ເພື່ອຍົກສູງປະສິດທິຜາບໃນການປະຕິບັດໜ້າທີ່ການເມືອງຂອງຕົນ, ຄຽງຄູ່ກັບນີ້ສືບຕໍ່ນຳພາສຶກສາອົບຮົມການເມືອງ-ແນວຄິດ, ປັບປຸງກົງຈັກການຈັດຕັ້ງ ກໍຄືແບບແຜນວິທີເຮັດວຽກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ກົງຈັກການຈັດຕັ້ງຊ່ວຍວຽກຂອງກຳມາທິການ ກໍຄືໜ່ວຍງານຊ່ວຍວຽກສະມາຊິກສະພາແຫ່ງຊາດຢູ່ເຂດເລືອກຕັ້ງ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແລະ ຫັນເປັນມືອາຊີບເທື່ອລະກ້າວ ເພື່ອສ້າງພະນັກງານສືບທອດປ່ຽນແທນທີ່ໜຸ່ມແໜ້ນ ແລະ ມີຄຸນນະພາບ; ສືບຕໍ່ປັບປຸງແບບແຜນວິທີເຮັດວຽກຂອງຕົນ, ມີການປະສານສົມທົບ ສາຍຕັ້ງ ແລະ ສາຍຂວາງ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ມີຄຸນນະພາບ, ປັບປຸງລະບົບການເກັບກຳຂໍ້ມູນ ແລະ ການລາຍງານສ່ອງແສງໃຫ້ເປັນປົກກະຕິ ເພື່ອສາມາດສະຫລຸບສັງລວມການເຄື່ອນໄຫວວຽກງານຂອງກຳມາທິການ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດໄດ້ທັນເວລາ.

(ສົມນຶກ ແກ້ວໄຊຍະຈັກ)

## ປະທານ...

ຂອງສະຫາຍປະທານສະພາແຫ່ງຊາດລາວ ມີຜົນສຳເລັດອັນສະຫງ່າງາມ.

ສະຫາຍ ປະທານສະພາແຫ່ງຊາດລາວ ໄດ້ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ທີ່ປະທານ ໂຮ່ ຈີ ມິ່ງ ຜູ້ນຳທີ່ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ທີ່ເຄົາລົບຮັກ ຮ່ວມກັນກໍ່ຕັ້ງຂຶ້ນ, ເພີ່ມພູນຄູນສ້າງ ແລະ ພັດທະນາຢ່າງຕໍ່ເນື່ອງຕະຫລອດມາ ຈາກຮຸ່ນຄົນສູ່ຮຸ່ນຄົນ ຈົນໄດ້ກາຍເປັນມໍລະດົກລວມອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວ ຂອງສອງປະເທດ; ປັດຈຸບັນ, ສາຍພົວພັນດັ່ງກ່າວ ຍັງສືບຕໍ່ໄດ້ການເພີ່ມພູນຄູນສ້າງໃນທຸກດ້ານ ເຊິ່ງສະແດງອອກ ໃນການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆຮ່ວມກັນດ້ວຍຫລາຍຮູບການ ທັງພົບປະຜ່ານລະບົບທາງໄກ. ພິເສດ, ໃນໄລຍະມີການແຜ່ລະບາດຂອງພະຍາດໂຄວິດ-19, ສສ.ຫວຽດນາມ ໄດ້ໃຫ້ການຊ່ວຍເຫລືອຢ່າງທັນການ ດ້ວຍການຊ່ວຍເຫລືອດ້ານທຶນຮອນ, ຢາວັກແຊັງ, ອຸປະກອນການແພດທີ່ຈຳເປັນ ເຊິ່ງມີມູນຄ່າລວມ 6,3 ລ້ານກວ່າໂດລາສະຫະລັດ ໃຫ້ແກ່ ສປປລາວ.

(ບຸນເກີດ ວົງໄຊຍາ)

## ຂ່າວກ້ອນ ອ້ອມ ອາທິດ

**ຄັດໂດຍ: ສ.ສາຍນ້ຳທາ**

❑ ມາຮອດປັດຈຸບັນ ເຂດເສດຖະກິດພິເສດຢູ່ ສປປລາວ ຕັ້ງຢູ່ 7 ແຂວງ ມີ 19 ສັນຍາພັດທະນາໂຄງການໃນຂອບເຂດທົ່ວປະເທດ, ໃນໄລຍະ 5 ປີຜ່ານມາ ມີບໍລິສັດເຂົ້າມາລົງທຶນຢູ່ບັນດາເຂດເສດຖະກິດພິເສດທັງໝົດ 743 ບໍລິສັດ, ມີທຶນຈົດທະບຽນ 12 ຕື້ກວ່າໂດລາ ແລະ ທຶນທັງໝົດ 36 ຕື້ກວ່າໂດລາ, ໃນຂະນະດຽວກັນ ມີການລົງທຶນຕົວຈິງໄປແລ້ວ 3 ຕື້ກວ່າໂດລາ ພິເສດໄດ້ມີບໍລິສັດທີ່ມີຊື່ສຽງ ແລະ ມີຄຸນນະພາບຈາກຕ່າງປະເທດເຂົ້າມາລົງທຶນ.

**ນສພ. ປະຊາຊົນ 9/12/2021**

❑ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປລາວ ມີສະມາຊິກທີ່ເປັນກຳມະການບໍລິຫານງານໃນທົ່ວປະເທດທັງໝົດ 5.915 ອົງ, ມີພະສົງ-ສາມະເນນໃນຂອບເຂດທົ່ວປະເທດທັງໝົດ 29.202 ອົງ ທຽບໃສ່ປີ 2016 ພະສົງ-ສາມະເນນຫລຸດລົງ 12%, ມີວັດທັງໝົດ 5.210 ວັດ, ໃນນີ້ ວັດທີ່ມີພະສົງອາໄສຢູ່ປະຈຳ 4.520 ວັດ ແລະ ວັດທີ່ຂາດພະສົງຢູ່ຊົ່ວຄາວ 690 ວັດ, ໂຮງຮຽນສົງມີທັງໝົດ 59 ແຫ່ງ.

**ນສພ. ປະເທດລາວ 10/12/2021**

❑ ມູນຄ່າການລົງທຶນຂອງອາເມລິກາ ໃນ ສປປລາວ ແຕ່ປີ 2008 ຮອດປັດຈຸບັນ (ສະເພາະໃນຂະແໜງກິດຈະການທົ່ວໄປ) ມີມູນຄ່າລວມທັງໝົດ 280,04 ລ້ານໂດລາ. ໃນນັ້ນ, ຂະແໜງການທີ່ອາເມລິກາ ລົງທຶນໃນ ສປປລາວ ສູງສຸດ ປະກອບດ້ວຍການກໍ່ສ້າງ, ອຸດສາຫະກຳ, ບໍ່ແຮ່ ແລະ ການຂຸດຄົ້ນ, ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ ແລະ ການເຄື່ອນໄຫວດ້ານທີ່ພັກເຊົາ, ບໍລິການ. 6 ເດືອນຕົ້ນປີ 2021 ມູນຄ່າການຄ້າລະຫວ່າງລາວ ແລະ ອາເມລິກາ ສາມາດປະຕິບັດໄດ້ 157,4 ລ້ານໂດລາ ໃນນັ້ນ, ມູນຄ່າການສົ່ງອອກປະຕິບັດໄດ້ 29,9 ລ້ານໂດລາ ແລະ ມູນຄ່າການນຳເຂົ້າປະຕິບັດໄດ້ 127,5 ລ້ານໂດລາ.

**ນສພ. ປະຊາຊົນ 9/12/2021**

# ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ລາຍງານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2

ຕໍ່ຈາກສະບັບກ່ອນ...

ສູ້ຊົນເກັບລາຍຮັບງົບປະມານ ທັງໝົດ 31.423 ຕື້ກີບ ເພີ່ມຂຶ້ນ 13,73% ທຽບໃສ່ແຜນປີ 2021, ລາຍຈ່າຍງົບປະມານທັງໝົດ 34.595 ຕື້ກີບ ເພີ່ມຂຶ້ນ 9,53% ທຽບໃສ່ແຜນປີ 2021; ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ອັດຕາເງິນເຟີ້ ຢູ່ໃນລະດັບ 5-7%, ອັດຕາແລກປ່ຽນເງິນກີບທຽບເງິນໂດລາ ໃຫ້ຢູ່ໃນລະດັບທີ່ສາມາດຄຸ້ມຄອງໄດ້ ບໍ່ສ້າງແຮງກົດດັນໃຫ້ແກ່ອັດຕາເງິນເຟີ້ ແລະ ຮັບປະກັນໃຫ້ໄດ້ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ຮັບປະກັນຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າຢ່າງໜ້ອຍ 3 ເດືອນ, ຄວບຄຸມປະລິມານ M2 ໃຫ້ເພີ່ມຂຶ້ນຢູ່ໃນລະດັບບໍ່ເກີນ 22% ທຽບໃສ່ປີຜ່ານມາ 20%; ຊຸກຍູ້ທະນາຄານທຸລະກິດລະດົມເງິນຝາກເພີ່ມຂຶ້ນ ເຮັດໃຫ້ຍອດເຫລືອເງິນຝາກຢູ່ທົ່ວລະບົບທະນາຄານທຸລະກິດບັນລຸໄດ້ 70% ຂອງ GDP ໃນທ້າຍປີ 2022, ຊຸກຍູ້ທະນາຄານທຸລະກິດປ່ອຍສິນເຊື່ອໃຫ້ໂຄງການທີ່ມີປະສິດທິຜົນ ແລະ ບັນດາຫົວໜ່ວຍ SMEs, ສົ່ງເສີມການຜະລິດພາຍໃນ ແລະ ການສົ່ງອອກ ເຮັດໃຫ້ຍອດເຫລືອສິນເຊື່ອຂະແໜງການທະນາຄານຢູ່ໃນລະດັບ 50% ຂອງ GDP ໃນທ້າຍປີ 2022 ແລະ ຍົກສູງຄຸນນະພາບສິນເຊື່ອຂອງທະນາຄານທຸລະກິດ ແລະ ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທະນາຄານທຸລະກິດໃຫ້ຢູ່ໃນລະດັບ 3%.

ມູນຄ່າການນຳເຂົ້າ-ສົ່ງອອກ ຄາດຄະເນໃຫ້ບັນລຸໄດ້ 12.788,25 ລ້ານໂດລາ, ໃນນີ້: ມູນຄ່າການສົ່ງອອກ 6.826,25 ລ້ານໂດລາ ແລະ ມູນຄ່າການນຳເຂົ້າ 5.962 ລ້ານໂດລາ. ການຜະລິດພະລັງງານໄຟຟ້າ ຄາດຄະເນປະຕິບັດໄດ້ 44.429 ລ້ານກິໂລວັດໂມງ, ມີມູນຄ່າ 23.225 ຕື້ກີບ ໃນນີ້ ຄາດຄະເນສົ່ງອອກໄປຕ່າງປະເທດ 34.560 ລ້ານກິໂລວັດໂມງ, ມູນຄ່າ 2.026 ລ້ານໂດລາ, ຄາດຄະເນຈຳໜ່າຍພາຍໃນປະເທດ 9.162 ລ້ານກິໂລວັດໂມງ, ມູນຄ່າ 774 ລ້ານໂດລາ ແລະ ມູນຄ່າການຜະລິດແຮ່ທາດ ປະມານ 13.877 ຕື້ກີບ. ສູ້ຊົນລະດົມແຫລ່ງທຶນເພື່ອການພັດທະນາ ທັງໝົດໃຫ້ໄດ້ 43.950 ຕື້ກີບ. ສົ່ງເສີມການຈັດຫາວຽກເຮັດງານທຳ ເຂົ້າສູ່ຕະຫລາດແຮງງານພາຍໃນ ແລະ ຕ່າງປະເທດ ປະມານ 45.500 ຄົນ ແລະ ສູ້ຊົນເຮັດໃຫ້ອັດຕາການວ່າງງານຫລຸດລົງຢູ່ໃນລະດັບ ບໍ່ເກີນ 19,4% ຂອງແຮງງານທັງໝົດ.

ປັດໄຈທີ່ຊຸກຍູ້ໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ 4,2% ໃນປີ 2022 ມີດັ່ງນີ້:

1) ຂະແໜງກະສິກຳ: ຄາດວ່າຈະຂະຫຍາຍຕົວ ໃນລະດັບ 2,5%: ແມ່ນຍ້ອນການປູກຝັງ, ການລ້ຽງສັດຈະຂະຫຍາຍຕົວ 1,8% ແລະ 3,5% ຕາມລຳດັບ ເນື່ອງຈາກໄດ້ມີການສົ່ງເສີມ ແລະ ຊຸກຍູ້ການຜະລິດພືດ ແລະ ລ້ຽງສັດ ເພື່ອເປັນສິນຄ້າຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໂດຍສະເພາະພືດ ແລະ ສັດທີ່ໄດ້ຮັບໂກຕາແລ້ວທີ່ຈະສົ່ງອອກໄປ ສປ ຈີນ. ນອກຈາກນີ້ ຂະແໜງປ່າໄມ້ ແລະ ການປະມົງ ຄາດວ່າຈະຂະຫຍາຍຕົວ ໃນລະດັບ 3% ແລະ 4,3% ຕາມລຳດັບ.

2) ຂະແໜງອຸດສາຫະກຳ: ຄາດວ່າຈະຂະຫຍາຍຕົວ ໃນລະດັບ 5%: ແມ່ນຍ້ອນຂະແໜງໄຟຟ້າ ແລະ ຂະແໜງການກໍ່ສ້າງ ຈະຂະຫຍາຍຕົວ 5,7% ແລະ 6,8% ຕາມລຳດັບ ເນື່ອງຈາກການຜະລິດກະແສໄຟຟ້າ ຄາດວ່າຈະບັນລຸໄດ້ 44.429 ລ້ານກິໂລວັດໂມງ (ປະຕິບັດປີ 2021: 41.916 ລ້ານກິໂລວັດໂມງ) ຍ້ອນເຂື່ອນຈຳນວນໜຶ່ງເລີ່ມການຜະລິດໃນປີ 2022 ແລະ ບາງເຂື່ອນສາມາດຜະລິດໄດ້ເຕັມກຳລັງ ແລະ ບັນດາໂຄງການກໍ່ສ້າງໃຫຍ່ຍັງຈະສືບຕໍ່ດຳເນີນການກໍ່ສ້າງ ໂດຍສະເພາະໂຄງການກໍ່ສ້າງເຂື່ອນ, ໂຄງການກໍ່ສ້າງພື້ນຖານໂຄງລ່າງໃນເຂດເສດຖະກິດພິເສດ, ໂຄງການກໍ່ສ້າງພື້ນຖານໃນເຂດທ່ອງທ່ຽວ ແລະ ບັນດາເສັ້ນທາງ ແລະ ທາງດ່ວນຕ່າງໆ. ນອກຈາກນີ້ ຂະແໜງບໍ່ແຮ່ ຄາດວ່າຈະສືບຕໍ່ຂະຫຍາຍຕົວ ໃນລະດັບ 0,5% ເນື່ອງຈາກຈະມີໂຄງການແຮ່ທາດຫລາຍແຫ່ງເລີ່ມການຜະລິດ ເຊິ່ງເຫັນໄດ້ ປັດຈຸບັນໄດ້ອະນຸມັດສຳຫລວດ ແລະ ຂຸດຄົ້ນແຮ່ເຫລັກ (ໄລຍະ 3 ປີ).

3) ຂະແໜງການບໍລິການ: ຄາດວ່າຈະຂະຫຍາຍຕົວເພີ່ມຂຶ້ນ ໃນລະດັບ 4,2% ຂະແໜງການຂົນສົ່ງ ແລະ ສາງ ຄາດວ່າຈະຂະຫຍາຍຕົວ ໃນລະດັບ 7% ຍ້ອນການເປີດການນຳໃຊ້ທາງລົດໄຟລາວ-ຈີນ ແລະ ມີສິ່ງອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ (ທ່າບົກ 3 ແຫ່ງ: ທ່າບົກຢູ່ເຂດສະຫວັນເຊໂນ, ທ່າບົກວັງເຕົ່າໂພນທອງ ແລະ ທ່າບົກທ່ານາແລ້ງ (ວຽງຈັນໂລຈິດສະຕິກ) ມີສູນເຕົ້າໂຮມຄ່ຽນຖ່າຍສິນຄ້າ ICD ຢູ່ເຂດບໍ່ເຕ່ນແດນງາມ ແລະ ເຂດທ່າແຂກ). ນອກຈາກນີ້ ການຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງສິນຄ້າ, ດ້ານຂ່າວສານ ແລະ ການສື່ສານ ຄາດວ່າຈະຂະຫຍາຍຕົວ ໃນລະດັບ 6% ແລະ 6,5% ຕາມລຳດັບ; ສ່ວນການບໍລິການທີ່ພັກອາໄສ ແລະ ຮ້ານອາຫານ ຈະຂະຫຍາຍຕົວ ໃນລະດັບ 1,8% ເນື່ອງຈາກຈະໄດ້ມີມາດຕະການສົ່ງເສີມລາວທ່ຽວລາວ ແລະ ຊຸກຍູ້ນັກທ່ອງທ່ຽວຕ່າງປະເທດເຂົ້າມາລາວ ໂດຍສະເພາະນັກທ່ອງທ່ຽວທີ່ໄດ້ຮັບວັກຊີນ 2 ເຂັມ ເປັນຕົ້ນ: ນັກທ່ອງທ່ຽວຈາກ ສປຈີນ ແລະ ສ.ເກົາຫລີ (ແຜນປີ 2022: ຄາດໝາຍນັກທ່ອງທ່ຽວພາຍໃນ ປະມານ 1,96 ລ້ານເທື່ອຄົນ ແລະ ນັກທ່ອງທ່ຽວຕ່າງປະເທດເຂົ້າມາລາວ ປະມານ 1,07 ລ້ານເທື່ອຄົນ).

2. ການລະດົມທຶນຈາກແຫລ່ງທຶນຕ່າງໆ: ມູນຄ່າການລົງທຶນລວມທັງໝົດໃຫ້ໄດ້ 43.950 ຕື້ກີບ ເພີ່ມຂຶ້ນ 41,31% ທຽບໃສ່ແຜນປີຜ່ານມາ (ປີ 2021 ຈຳນວນ 31.100 ຕື້ກີບ) ໃນນີ້:

1) ທຶນຈາກງົບປະມານລັດ: ຈຳນວນ 3.950 ຕື້ກີບ ກວມ 8,9% ໃນນີ້: ບ້ວງລົງທຶນບ້ວງປົກກະຕິ ຈຳນວນ 2.200 ຕື້ກີບ ແລະ ບ້ວງຈົດຮັບ-ຈົດຈ່າຍ ແລະ ລົງທຶນອື່ນໆ ຈຳນວນ 1.750 ຕື້ກີບ.

2) ການຊ່ວຍເຫລືອທາງການເພື່ອການພັດທະນາ (ODA): ຈຳນວນ 6.750 ຕື້ກີບ ກວມ 15,35%;

3) ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ: ຈຳນວນ 29.420 ຕື້ກີບ ກວມ 66,93%;

4) ການລົງທຶນຈາກແຫລ່ງທຶນອື່ນໆ (ການລົງທຶນຈາກຊຸມຊົນ): ຈຳນວນ 3.830 ຕື້ກີບ ກວມ 8,71%.

\+ ເປົ້າໝາຍການລົງທຶນຂອງລັດ ປີ 2022:

ສຸມໃສ່ບັນດາໂຄງການສົມທົບທຶນໂຄງການຊ່ວຍເຫລືອຈາກຕ່າງປະເທດ, ໂຄງການສືບຕໍ່ທີ່ບໍ່ທັນສຳເລັດໃຫ້ສຳເລັດ ແລະ ນຳໃຊ້ໄດ້ໄວ, ການແກ້ໄຂໜີ້ສິນຜ່ານມາ; ສຳລັບໂຄງການໃໝ່ຕ້ອງມີການເລືອກເຟັ້ນ ເພື່ອຈຳກັດໂຄງການໃໝ່ບໍ່ໃຫ້ຫລາຍເກີນຄວາມສາມາດຂອງງົບປະມານ ທີ່ຈະພາໃຫ້ເກີດສະພາບໜີ້ສິນໃນອະນາຄົດ; ສະນັ້ນ, ໂຄງການສະເໜີໃໝ່ຕ້ອງມີເປົ້າໝາຍ ດັ່ງນີ້:

(1) ແກ້ໄຂໄພພິບັດທາງທຳມະຊາດ, ຊຸກຍູ້ການຄວບຄຸມຕອບໂຕ້ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19;

(2) ສະໜອງພື້ນຖານໂຄງລ່າງຊົນນະບົດໃນເຂດຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

(3) ການເຝິກສີມືແຮງງານ, ການສົ່ງເສີມການສ້າງວຽກເຮັດງານທຳ;

(4) ການເຝິກອົບຮົມວຽກງານວິຊາການ ແລະ ການຖ່າຍທອດວິທະຍາສາດ-ເຕັກໂນໂລຊີ;

(5) ການສະໜອງອຸປະກອນການແພດ, ອຸປະກອນການສຶກສາ, ອຸປະກອນສຳລັບພັດທະນາສີມືແຮງງານ;

(6) ການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ ແລະ ໂຄງການລົງທຶນ (ສະເພາະຂະແໜງຄຸ້ມຄອງມະຫາພາກຂັ້ນສູນກາງ);

(7) ການສ້າງຕົວແບບການຜະລິດ, ໂຄງການທີ່ຈຳເປັນທາງດ້ານຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

(8) ການສ້ອມແປງສຳນັກງານຫ້ອງການບ່ອນເຮັດວຽກທີ່ຈຳເປັນແທ້ໆ;

(9) ເສັ້ນທາງເຂົ້າສູ່ເຂດການຜະລິດ-ບໍລິການທີ່ຕິດພັນກັບການນຳໃຊ້ລົດໄຟລາວ-ຈີນ ແລະ ທ່າແຮງອື່ນໆ ຂອງປະເທດ.

\+ ຄາດຄະເນໂຄງປະກອບການລົງທຶນ (ສຳລັບລົງທຶນປົກກະຕິ ຈຳນວນ 2.200 ຕື້ກີບ): ການລົງທຶນຈາກງົບປະມານລັດ ບ້ວງທຶນປົກກະຕິ ຄາດວ່າຈະຈັດສັນໃສ່ວຽກງານທີ່ຈຳເປັນ ຄື: ສົມທົບໂຄງການ ODA: 5-10%; ໂຄງການສືບຕໍ່: 40-50%; ຊຳລະໜີ້: 30-40% ແລະ ໂຄງການໃໝ່: 5-10%.

3.2.4 ບາງວຽກຈຸດສຸມ ປະຈຳປີ 2022

(1) ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກງານບຸລິມະສິດ ຂອງວາລະແຫ່ງຊາດ ທີ່ກຳນົດໄວ້ໃນ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ກ່ຽວກັບການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວຽກຈຸດ

ອ່ານຕໍ່ສະບັບໜ້າ...

# ແຜນການສ້າງ ແລະ ປັບປຸງກົດໝາຍ ຂອງ ສພຊ ຊຸດທີ IX ທັງໝົດ 96 ສະບັບ

ຕໍ່ຈາກສະບັບກ່ອນ...

ກຳມະການສັງກັດ ກາກໜ ກໍຄືເສນາທິການຊ່ວຍວຽກ ທີ່ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ກໍໄດ້ເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບສູງ ຕໍ່ການປະຕິບັດໜ້າທີ່ວຽກງານທີ່ຕົນຮັບຜິດຊອບ.

2. ຕີລາຄາດ້ານຄົງຄ້າງ

ຄຽງຄູ່ກັບດ້ານດີ ທີ່ກ່າວມາຂ້າງເທິງນັ້ນ ກໍຍັງປາສະຈາກບໍ່ໄດ້ດ້ານຄົງຄ້າງ ດັ່ງນີ້:

- ການຕິດຕາມກວດກາ ການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ການອອກນິຕິກຳໃຕ້ກົດໝາຍ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການ;
- ການໂຄສະນາເຜີຍແຜ່ກົດໝາຍ ຍັງປະຕິບັດບໍ່ໄດ້ຕາມແຜນການທີ່ກຳນົດ;
- ກົດໝາຍທີ່ໄດ້ພິຈາລະນາຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ຍັງມີລັກສະນະຟ້າວຟັ່ງແລ່ນນຳເວລາ, ບໍ່ທັນຮັບປະກັນຄຸນນະພາບເທົ່າທີ່ຄວນ.

2. ສາເຫດທີ່ພາໃຫ້ມີດ້ານຄົງຄ້າງ

ຍ້ອນສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ເປັນວົງກວ້າງ ຢູ່ພາຍໃນປະເທດ ເຊິ່ງເຮັດໃຫ້ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ກາກໜ ບໍ່ສາມາດບັນລຸໄດ້ຕາມແຜນການທີ່ໄດ້ກຳນົດໄວ້; ການປະສານສົມທົບ ແລະ ຄວາມເປັນເຈົ້າການຂອງພາກສ່ວນກ່ຽວຂ້ອງ ໃນການຮຽບຮຽງຄືນບັນດາກົດໝາຍທີ່ໄດ້ຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ IX ຕາມການປະກອບຄຳເຫັນຂອງຜູ້ແທນນັ້ນ ມີຄວາມຊັກຊ້າ.

3. ບົດຮຽນທີ່ຖອດຖອນໄດ້

ຜ່ານການຈັດຕັ້ງການປະຕິບັດໜ້າທີ່ວຽກງານໃນໜຶ່ງປີຜ່ານມາ ສາມາດຖອດຖອນບົດຮຽນໄດ້ ດັ່ງນີ້:

1. ມີການສຶກສາອົບຮົມດ້ານການເມືອງ-ແນວຄິດຢ່າງເປັນປົກກະຕິ ໂດຍຖືເອົາກອງປະຊຸມປະຈຳເດືອນຂອງບັນດາກົມທີ່ເປັນເສນາທິການ ແລະ ຖືເອົາກອງປະຊຸມປະຈຳເດືອນຂອງຄະນະນຳ ກາກໜ ແລະ ກອງປະຊຸມຄົບຄະນະກຳມາທິການ ເພື່ອສຳຫລວດກວດກາຕຳນິສົ່ງຂ່າວເຊິ່ງກັນ ແລະ ກັນ ເພື່ອສ້າງຄວາມກ້າວໜ້າ, ຍົກລະດັບກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດຢ່າງເລິກເຊິ່ງ ເພື່ອຈັດຕັ້ງຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານຕົວຈິງ;

2. ມີການປະສານສົມທົບກັບກຳມາທິການອື່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ວຽກງານໃຫ້ບັນລຸຕາມແຜນການ;

3. ມີການຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດໜ້າທີ່ວຽກງານຂອງພະນັກງານ, ລັດຖະກອນເປັນປົກກະຕິ;

4. ຮຸ້ເສີມຂະຫຍາຍຄວາມຮູ້, ສະຕິປັນຍາ ແລະ ຫົວຄິດປະດິດສ້າງຂອງພະນັກງານ, ສະມາຊິກພັກ ແລະ ລັດຖະກອນພາຍໃນກຳມາທິການສົມທົບກັບການຍາດແຍ່ງ ແລະ ຮູ້ນຳໃຊ້ຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການທາງນອກທີ່ກ່ຽວຂ້ອງກັບການປະຕິບັດພາລະບົດບາດ ແລະ ໜ້າທີ່

ອ່ານຕໍ່ສະບັບໜ້າ...

# ລັດຖະບານ ລາຍງານກ່ຽວກັບວິໄສທັດ ແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ

ຕໍ່ຈາກສະບັບກ່ອນ...

ການປະຕິວັດອຸດສາຫະກຳ ຄັ້ງທີ 4: ເກີດຂຶ້ນໃນສັດຕະວັດທີ 21 ນີ້ (ເລີ່ມແຕ່ຊຸມປີ 2010) ເຊິ່ງເອີ້ນວ່າ ຍຸກອຸດສາຫະກຳ 4.0, ຍ້ອນວ່າບັນດານັກວິທະຍາສາດໄດ້ຄົ້ນຄວ້າ ພັດທະນາ ນຳໃຊ້ເຕັກໂນໂລຊີທັນສະໄໝ ໃນ 3 ຂົງເຂດແບບປະສົມປະສານກັນເຊັ່ນ: ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, ເຕັກໂນໂລຊີດ້ານຟີຊິກ ແລະ ເຕັກໂນໂລຊີຊີວະພາບ ເຊິ່ງໄດ້ກາຍເປັນເຕັກໂນໂລຊີດິຈິຕອນ ຂອງຍຸກອຸດສາຫະກຳ 4.0 ເປັນຕົ້ນແມ່ນເຕັກໂນໂລຊີອິນເຕີເນັດແຫ່ງສັບພະສິ່ງ (IoT), ການສ້າງຖານຂໍ້ມູນມະຫາສານ (Big Data) ແລະ ກຸ່ມຂໍ້ມູນຜູກພັນ (Block Chain), ປັນຍາປະດິດ, ຫຸ່ນຍົນ ແລະ ພາຫະນະບໍ່ມີຄົນຂັບ, ເຕັກໂນໂລຊີຊີວະພາບ ແລະ ພັນທຸກຳ, ໂຮງງານອັດສະລິຍະ ແລະ ສ້າງຕົວເມືອງອັດສະລິຍະ. ວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ກາຍເປັນພາຫະນະເພື່ອການຄົ້ນຄວ້າໂລກ, ດັດແປງທຳມະຊາດ ແລະ ປົກປ້ອງໂລກ. ວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ກາຍເປັນກຳລັງແຮງຊຸກຍູ້ຂະບວນການຜະລິດ ແລະ ການແຂ່ງຂັນລະຫວ່າງປະເທດ, ການປະຕິວັດອຸດສາຫະກຳ ຄັ້ງທີ 4 ໄດ້ນຳມາທັງກາລະໂອກາດ ແລະ ສິ່ງທ້າທາຍ ສູ່ມວນມະນຸດເຮົາເຊັ່ນ:

ໃນດ້ານເສດຖະກິດ: ການປະຕິວັດອຸດສາຫະກຳ ຄັ້ງທີ 4 ຈະສົ່ງຜົນສະທ້ອນໃຫ້ເສດຖະກິດຂອງໂລກກ້າວເຂົ້າສູ່ເສດຖະກິດແຫ່ງພູມປັນຍາ, ເຮັດໃຫ້ໂຄງປະກອບເສດຖະກິດທີ່ເປັນມູນເຊື້ອຄື: ອຸດສາຫະກຳ, ກະສິກຳ ແລະ ການບໍລິການ ເຊື່ອມເຂົ້າຫາກັນ, ການຄ້າ ແລະ ການບໍລິການ ຈະເຂົ້າເຖິງຜູ້ຊົມໃຊ້ໂດຍກົງ, ການຜະລິດຈະນຳໃຊ້ເຕັກໂນໂລຊີກ້າວໜ້າແບບອັດຕະໂນມັດ, ປະຢັດຊັບພະຍາກອນທຳມະຊາດ ແລະ ຫລຸດຜ່ອນການໃຊ້ແຮງງານ. ບົດບາດການນຳໃຊ້ນະວັດຕະກຳໃໝ່ນັບມື້ນັບຈະພົ້ນເດັ່ນຂຶ້ນ. ສະນັ້ນ, ສິນຄ້າຕ້ອງມີຄຸນນະພາບດີ, ໄດ້ມາດຕະຖານສາກົນ ຈຶ່ງຈະສາມາດສົ່ງອອກສູ່ຕະຫລາດສາກົນໄດ້.

ໃນດ້ານການເງິນ ແລະ ການບໍລິການ: ການປະຕິວັດອຸດສາຫະກຳຄັ້ງທີ 4 ຈະເອື້ອອຳນວຍຄວາມສະດວກໃຫ້ມີການບໍລິການວ່ອງໄວ, ໂປ່ງໃສ ແລະ ເຖິງຜູ້ຊົມໃຊ້ໂດຍກົງ, ການຄ້າຂາຍ ຈະຜ່ານອິນເຕີເນັດ, ການຊຳລະສະສາງ ຈະຜ່ານລະບົບມືຖືອັດສະລິຍະ, ນຳໃຊ້ລະບົບ QR Code ໂດຍບໍ່ນຳໃຊ້ເງິນສົດ, ສະນັ້ນ ການເກັບພາສີ-ອາກອນ ຈະຕ້ອງໄດ້ປັບປຸງໃຫ້ສອດຄ່ອງກັບຍຸກສະໄໝເສດຖະກິດດິຈິຕອນ.

ໃນດ້ານສັງຄົມ: ວຽກງານການສຶກສາ ແລະ ສາທາລະນະສຸກ ຈະມີເຄື່ອງມື ແລະ ພາຫະນະທີ່ທັນສະໄໝ ຮັບໃຊ້ການສິດສອນຮ່ຳຮຽນ, ການກວດສຸຂະພາບ ແລະ ປິ່ນປົວພະຍາດ, ແຕ່ຈະເພີ່ມທະວີຄວາມແຕກໂຕນ ລະຫວ່າງຂື້ອທຸກ-ຂື້ອຮັ່ງ ຢູ່ໃນສັງຄົມ, ຖ້າແກ້ໄຂບັນຫາແຮງງານບໍ່ໄດ້ດີ ກໍຈະເຮັດໃຫ້ເກີດມີໄພວ່າງງານຫລາຍຂຶ້ນ.

ໃນດ້ານຄຸ້ມຄອງບໍລິຫານລັດ: ຍຸກອຸດສາຫະກຳ 4.0 ຈະສ້າງກາລະໂອກາດໃຫ້ອົງການຂອງລັດ ນຳໃຊ້ເຄື່ອງມືທັນສະໄໝ ເພື່ອຄຸ້ມຄອງບໍລິຫານລັດໃຫ້ວ່ອງໄວ ແລະ ມີປະສິດທິຜົນ, ແຕ່ຄຽງຄູ່ກັນນັ້ນ ການສື່ສານຂໍ້ມູນຂ່າວສານ, ສື່ສັງຄົມ

ອ່ານຕໍ່ສະບັບໜ້າ...

# ສພຂ ເຊກອງ ຫາລືການກະກຽມ ກອງປະຊຸມສະໄໝສາມັນເທື່ອທີ 2



(ສພຊ) ຕອນບ່າຍວັນທີ 6 ທັນວາ 2021 ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບການກະກຽມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານ ສພຂ ເຊກອງ; ມີບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳ ສພຂ, ຄະນະກຳມະການ 3 ກຳມະການ, ຄະນະເລຂາທິການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ບຸນຕຽມ ລັດບົວສີ ຮອງເລຂາທິການ ສພຂ ໄດ້ຂຶ້ນຜ່ານບັນດາເນື້ອໃນເອກະສານຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນແມ່ນບັນດາແຈ້ງການ, ແຜນການເຄື່ອນໄຫວ, ມະຕິແຕ່ງຕັ້ງຄະນະຮັບຜິດຊອບ, ມະຕິແບ່ງວຽກໃນກອງປະຊຸມສະໄມສາມັນເທື່ອທີ 2 ແລະ ເອກະສານອື່ນໆ ກ່ອນການດຳເນີນກອງປະຊຸມສະໄໝສາມັນ; ຈາກນັ້ນ, ຄະນະຜູ້ແທນທີ່ເຂົ້າຮ່ວມໃນກອງປະຊຸມກໍໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ມີຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ບັນດາເນື້ອໃນເອກະສານດັ່ງກ່າວມີຄວາມເປັນເອກະພາບສູງ ແລະ ມີເນື້ອໃນທີ່ຄົບຖ້ວນສົມບູນ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ຕອນທ້າຍຂອງກອງປະຊຸມ, ທ່ານ ດົງເພັດ ພະຍົນ ໄດ້ມີຄຳເຫັນໂອ້ລົມ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາທ່ານທີ່ໄດ້ສຸມທຸກສະຕິປັນຍາ, ພ້ອມກັນແລກປ່ຽນຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ຮຽກຮ້ອງບັນດາທ່ານຈົ່ງພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານທີ່ຍັງຄ້າງໃຫ້ສຳເລັດ ໂດຍສະເພາະໃຫ້ກະກຽມຄວາມພ້ອມຮອບດ້ານໃນການດຳເນີນກອງປະຊຸມຄົບຄະນະ ປະຈຳປີ 2021 ຂອງ 3 ຄະນະກຳມະການ, ກອງປະຊຸມຮ່ວມກັບອົງການປົກຄອງແຂວງ, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ແລະ ກອງປະຊຸມປະຈຳປີຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ທີ່ຈະໄດ້ໄຂຂຶ້ນໃນຕໍ່ໜ້ານີ້ ໂດຍສະເພາະດ້ານເນື້ອໃນບົດປັ່ນອ້ອມໃຫ້ມີຄວາມຄົບຖ້ວນສົມບູນ ແລະ ສືບຕໍ່ປະສານສົມທົບກັບບັນດາພະແນກການ, ກົມກອງ ແລະ ຂະແໜງການທີ່ກ່ຽວຂ້ອງໃນການສັງລວມເອກະສານທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 2 ໃຫ້ມີຜົນສຳເລັດ.

(ນັກຂ່າວ ສພຂ ເຊກອງ)



# ສພຂ ສາລະວັນ ເຝິກອົບຮົມວຽກງານສົ່ງເສີມ ບົດບາດຄວາມສະເໝີພາບຍິງ-ຊາຍ

(ສພຊ) ສະພາປະຊາຊົນແຂວງ (ສພຂ) ສາລະວັນ ສຳເລັດກອງປະຊຸມເຝິກອົບຮົມກ່ຽວກັບວຽກງານສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງ ພາຍຫລັງດຳເນີນກອງປະຊຸມມາເປັນເວລາ 2 ວັນ ນັບແຕ່ວັນທີ 3-4 ທັນວາ 2021 ຢູ່ທີ່ສະໂມສອນເມືອງຕຸ້ມລານ ແຂວງສາລະວັນ ໂດຍການເປັນປະທານກອງປະຊຸມຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານ ສພຂ ສາລະວັນ; ເຂົ້າຮ່ວມມີຄະນະປະຈຳ ສພຂ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງ 8 ເມືອງ, ຄະນະເລຂາທິການ, ຕາງໜ້າຈາກສະຫະພັນແມ່ແຂວງ ແລະ ປະຈຳເມືອງ, ແຂກທີ່ຖືກເຊີນ ຕະຫລອດຮອດພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມທັງໝົດ 70 ກວ່າທ່ານ, ກອງປະຊຸມນີ້ໄດ້ຈັດຂຶ້ນບົນພື້ນຖານການຮັກສາມາດຕະການປ້ອງກັນ, ຕ້ານສະກັດກັ້ນພະຍາດໂຄວິດ-19 ຢ່າງເຂັ້ມງວດ.



ບັນດາທ່ານທີ່ເຂົ້າຮ່ວມໃນຄັ້ງນີ້, ໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍຫົວຂໍ້ທີ່ສຳຄັນຕ່າງໆ ປະກອບມີ: ບົດຕີລາຄາສະພາບການຈັດຕັ້ງປະຕິບັດແຜນພັດທະນາຊັບພະຍາກອນມະນຸດໃນໄລຍະ (2017-2020) ແລະ ແຜນພັດທະນາຊັບພະຍາກອນມະນຸດ 5 ປີ (2021-2025) ຂອງແຂວງສາລະວັນ; ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ; ຍຸດທະສາດການເຊື່ອມທັດສະນະບົດບາດຍິງ-ຊາຍຢູ່ ສພຂ; ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ຢູ່ໃນຂົງເຂດການຜະລິດກະສິກຳ; ຄວາມຮູ້ພື້ນຖານບົດບາດຍິງ-ຊາຍ, ສະພາບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ສະພາບການຄ້າມະນຸດ, ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ແລະ ວຽກງານໂພຊະນາການ, ມາດຕະການປ້ອງກັນພະຍາດໂຄວິດ-19.

ການເຝິກອົບຮົມຄັ້ງນີ້, ຍັງໄດ້ພ້ອມກັນແລກປ່ຽນຄຳຄິດຄຳເຫັນເພື່ອຢ່າງເປັນຂະບວນຟົດຟື້ນ ທັງນີ້, ກໍເພື່ອເຮັດໃຫ້ທຸກພາກສ່ວນໄດ້ຮັບຮູ້ຢ່າງເລິກເຊິ່ງຕໍ່ກັບວຽກງານການເຊື່ອມທັດສະນະບົດບາດຍິງ-ຊາຍຈາກທຸກການວາງແຜນກິດຈະກຳ, ການສ້າງ-ປັບປຸງບັນດານະໂຍບາຍ, ກົດໝາຍ, ແຜນງານໃນທຸກຂົງເຂດວຽກງານໃນທຸກລະດັບ ເພດຍິງ-ເພດຊາຍ ໄດ້ຮັບຜົນປະໂຫຍດເທົ່າທຽມກັນ ປາສະຈາກຄວາມບໍ່ສະເໝີພາບຢ່າງຖາວອນ; ທັງເປັນການຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາ ແລະ ລົບລ້າງທຸກຮູບການກະທຳທີ່ເປັນການແບ່ງແຍກຄວາມບໍ່ສະເໝີພາບ ຕໍ່ເພດຍິງ ແລະ ເພດຊາຍ ໃຫ້ມີສິດເທົ່າທຽບກັນ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ທັງປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງສີວິໄລ.

ໃນໂອກາດດຽວກັນ, ຜູ້ເຂົ້າຮ່ວມການເຝິກອົບຮົມຍັງໄດ້ເດີນທາງໄປພົບປະ ແລະ ຢ້ຽມຢາມກຸ່ມຫັດຖະກຳຕໍ່າແຜ່ນແພຂອງສະຫະພັນແມ່ຍິງບ້ານດິນດາກ ເມືອງຕຸ້ມລານ ແຂວງສາລະວັນ ໂດຍໃຫ້ການຕ້ອນຮັບຈາກເລຂາໜ່ວຍພັກນາຍບ້ານ ພ້ອມດ້ວຍປະຊາຊົນພາຍໃນບ້ານ ເຊິ່ງນາຍບ້ານດິນດາກ ໄດ້ລາຍງານໃຫ້ຮູ້ວ່າ: ກຸ່ມຫັດຖະກຳຕໍ່າແຜນແພບ້ານດິນດາກ ເຊິ່ງມີຜະລິດຕະພັນແພສິ້ນ, ແພຕັດເຄື່ອງ, ຜ້າແພປູໂຕະ, ຜ້າບ່ຽງ ແລະ ອື່ນໆ ທີ່ມີເອກະລັກດ້ານລວດລາຍອັນສະເພາະທີ່ສວຍງາມ, ຜ່ານມາມີຫລາຍພາກສ່ວນໃຫ້ການສະໜັບສະໜູນງົບປະມານ ແລະ ອຸປະກອນເຂົ້າໃນການຜະລິດ ສາມາດຕອບສະໜອງໃຫ້ກຸ່ມລູກຄ້າທີ່ສົນໃຈເປັນຈຳນວນຫລວງຫລາຍ ໂດຍປະກອບມີ 3 ກຸ່ມຜະລິດ ສາມາດຜະລິດໄດ້ 500 ກວ່າຜືນ/ປີ ຄິດເປັນມູນຄ່າ 15 ລ້ານກວ່າກີບ ເຮັດໃຫ້ເພດຍິງມີລາຍຮັບເຂົ້າຄອບຄົວສ້າງໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນເປັນກ້າວໆ.

(ດີລຳພົນ ພົມມະຈັນ)



# ສພຂ ຈຳປາສັກ ສຳເລັດເຝິກອົບຮົມການສ້າງນິຕິກຳໃຕ້ກົດໝາຍ ແລະ ຄວາມເຂົ້າໃຈກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ

(ສພຊ) ພາຍຫລັງດຳເນີນມາເປັນເວລາ 2 ວັນ ນັບແຕ່ຕອນເຊົ້າຂອງວັນທີ 9-10 ທັນວາ 2021 ກອງປະຊຸມເຝິກອົບການສ້າງນິຕິກຳໃຕ້ກົດໝາຍ ແລະ ຄວາມເຂົ້າໃຈກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ຈຳປາສັກ ຈັດຂຶ້ນຢູ່ທີ່ສະໂມສອນຂອງເມືອງສຸຂຸມາ ແຂວງຈຳປາສັກ ໄດ້ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ໂດຍການເປັນປະທານເປີດ ແລະ ປິດກອງປະຊຸມຂອງທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານ ສພຂ ຈຳປາສັກ; ມີບັນດາວິທະຍາກອນຂອງ ສພຂ, ສສຂ ຈຳປາສັກ ປະຈຳເຂດເລືອກຕັ້ງ 9 ເມືອງ, 1 ນະຄອນ ທີ່ເປັນສຳມະນາກອນ ແລະ



ພະນັກງານວິຊາການທີ່ຮັບຜິດຊອບຮັບໃຊ້ກອງປະຊຸມເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ຈັດຂຶ້ນໂດຍ ສພຂ ຈຳປາສັກ ສົມທົບກັບສະພາແຫ່ງຊາດ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ໂດຍມີຈຸດປະສົງເພື່ອຍົກລະດັບພາລະບົດບາດ, ສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ໂດຍສະເພາະພາລະບົດບາດດ້ານນິຕິກຳ, ດ້ານການຕົກລົງບັນຫາພື້ນຖານສຳຄັນຂອງທ້ອງຖິ່ນ, ດ້ານການຕິດຕາມກວດກາແນໃສ່ຍົກສູງລະດັບຄວາມຮູ້, ຄວາມສາມາດໃຫ້ແກ່ ສພຂ ຈຳປາສັກ ໃຫ້ມີຄວາມເຂັ້ມແຂງ.

ຕະຫລອດໄລຍະຂອງການດຳເນີນກອງປະຊຸມ, ມີທັງຮ່ວມແບບທາງໄກ (ວີດີໂອ) ໂດຍວິທະຍາກອນ ຈາກສະພາແຫ່ງຊາດ ນຳສະເໜີບົດຮຽນທີ່ຢູ່ນະຄອນຫລວງວຽງຈັນ ແລະ ການນຳສະເໜີບົດຮຽນໃຫ້ຕົວຈິງໃນການດຳເນີນກອງປະຊຸມຈາກວິທະຍາກອນຂອງ ສພຂ. ຜ່ານການຮັບຟັງ, ສາມາດເຫັນໄດ້ເຖິງຄວາມເອົາໃຈໃສ່ຂອງບັນດາສຳມະນາກອນ ໃນການເຮັດໜ້າທີ່ຄວາມຮັບຜິດຊອບຂອງຕົນ ສຶກສາຄົ້ນຄວ້າ ແລະ ເຊື່ອມຊຶມເອົາບັນດາເນື້ອໃນບົດຮຽນ, ຕັ້ງຂໍ້ຊັກຖາມຕໍ່ຫົວຂໍ້ບົດຮຽນທີ່ວິທະຍາກອນໄດ້ນຳສະເໜີຢ່າງໜັກແໜ້ນເຂັ້ມແຂງ ແລະ ມີຈຸດສຸມ, ເຮັດໃຫ້ການດຳເນີນກອງປະຊຸມເຕັມໄປດ້ວຍບັນຍາກາດຟົດຟື້ນ ແລະ ສ້າງສັນ.

ຕອນທ້າຍການດຳເນີນກອງປະຊຸມ, ທ່ານ ແກ້ວລັດຕະນະ ສີຫາວົງ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ກ່າວວ່າ: ກອງປະຊຸມເຝິກອົບຮົມຍົກລະດັບຂີດຄວາມສາມາດໃຫ້ແກ່ ສສຂ ຈຳປາສັກ, ໄດ້ດຳເນີນໄປດ້ວຍບັນຍາກາດທີ່ເຄັ່ງຮ້ອນໃນທາບການງສະພາບການລະບາດຂອງພະຍາດໂຄວິດ-19 ແລະ ສາມາດບັນລຸຜົນສຳເລັດຢ່າງຈົບງາມ. ແຕ່ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການ ໃນການເຝິກອົບຮົມຄັ້ງນີ້, ພວກເຮົາມີຂໍ້ຄົງຄ້າງບາງດ້ານ ເປັນຕົ້ນແມ່ນດ້ານງົບປະມານຈຳກັດ, ເວລາດຳເນີນກອງປະຊຸມໃຊ້ເວລາໜ້ອຍ ແຕ່ເນື້ອໃນມີຫລາຍຫົວຂໍ້ ເຮັດໃຫ້ການສົນທະນາ ແລະ ແລກປ່ຽນບົດຮຽນ ໃຊ້ເວລາບໍ່ຫລາຍ, ສ່ວນຫລາຍອາໄສການບັນລະຍາຍເປັນຕົ້ນຕໍ, ອີກດ້ານໜຶ່ງການຈັດເຝິກອົບຮົມໃນຄັ້ງນີ້ ພັດນອນຢູ່ໃນທ່າມກາງການແຜ່ລະບາດຂອງພະຍາດໂຄວິດ-19 ຍັງລະບາດຢູ່ໃນຊຸມຊົນ. ເຖິງຢ່າງໃດກໍຕາມ, ຜົນສຳເລັດຂອງກອງປະຊຸມຄັ້ງນີ້, ເປັນຜົນສຳເລັດໃນເບື້ອງຕົ້ນ ທາງດ້ານຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຫລັກການ, ທິດສະດີ, ສິ່ງສຳຄັນທີ່ສຸດກໍແມ່ນບັນດາທ່ານຕ້ອງນຳເອົາທິດສະດີ, ບົດຮຽນທີ່ໄດ້ຮັບຮູ້ ແລະ ເຂົ້າໃຈ ໄປນຳໃຊ້ເຂົ້າໃນພຶດຕິກຳຕົວຈິງຢູ່ກົມກອງ, ທ້ອງຖິ່ນຮາກຖານຂອງຕົນ ນັ້ນແມ່ນຜົນສຳເລັດທີ່ແທ້ຈິງ.

(ສົມວິຈິດ ໄຊມົນຕີ)



# ສສຊ ສະເໜີເພີ່ມພາສີທີ່ດິນເພື່ອກະຕຸ້ນການພັດທະນາທີ່ດິນ

ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 2 ທັນວາ 2021 ທ່ານ ປອ. ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ໄດ້ປະກອບຄຳເຫັນຕໍ່ບົດລາຍງານການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 9 ເດືອນຂອງຕົ້ນປີ 2021 ແລະ ທ້າຍປີ 2021 ແລະ ແຜນທິດທາງພັດທະນາເສດຖະກິດ-ສັງຄົມ 2022 ຂອງລັດຖະບານ ເຊິ່ງທ່ານໄດ້ຍ້ອງຍໍຊົມເຊີຍ ລັດຖະບານທີ່ມີຜົນສຳເລັດຫລາຍດ້ານ ໃນການປະຕິບັດແຜນການທີ່ຜ່ານມາ ເຖິງແມ່ນວ່າມີອຸປະສັກຫລາຍຢ່າງ ທ່ານໄດ້ສະແດງຄວາມຊົມເຊີຍຕໍ່ແຜນທິດທາງໃນການພັດທະນາ 2020 ທີ່ໄດ້ລະບຸກໍມີຫລາຍທິດທາງ, ມີຫລາຍແຜນການ ໃນການສືບຕໍ່ພັດທະນາເພື່ອຊຸກດັນໃນການພັດທະນາເສດທະກິດ-ສັງຄົມຂອງປະເທດເຮົາໃຫ້ດີຂຶ້ນ. ພ້ອມນັ້ນ, ທ່ານໄດ້ມີຄຳເຫັນເພື່ອເປັນການແລກປ່ຽນທາງດ້ານເສດຖະກິດມີຢູ່ 4 ຂໍ້ຄື:

1). ເພື່ອສືບຕໍ່ຊຸກຍູ້ສົ່ງເສີມທາງດ້ານເສດຖະກິດ ກໍຄືແຜນການສ້າງລາຍຮັບເຂົ້າງົບປະມານ ຫລືໃຫ້ແກ່ລັດຖະບານ ທ່ານສະເໜີວ່າໃຫ້ລັດຖະບານສືບຕໍ່ປັບປຸງ ຫລືສ້າງມາດຕະການຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດ, ຊັບພະຍາກອນທີ່ມີຢູ່ໃຫ້ເກີດຜົນປະໂຫຍດສູງສຸດ ໂດຍທ່ານໄດ້ຍົກເຫັນວ່າຊັບພະຍາກອນທຳມະຊາດລວມໄປເຖິງແຮ່ທາດ, ດິນແມ່ນເປັນປັດໄຈການຜະລິດທີ່ສຳຄັນໃນການຊຸກດັນໃຫ້ການພັດທະນາເສດຖະກິດ ດັ່ງນັ້ນ, ການຈະນຳໃຊ້ຊັບພະຍາກອນທຳມະຊາດໃຫ້ເກີດຜົນປະໂຫຍດສູງສຸດ ຄວນໃຫ້ເບິ່ງຄືນວ່າຫລາຍໂຄງການນັ້ນມີຜົນຕອບແທນທາງໂດຍກົງ ແລະ ທາງອ້ອມຫລາຍສ່ຳໃດ ຢາກໃຫ້ທົບທວນຄືນ ເພາະເຮົາເຫັນຫລາຍໂຄງການພັດທະນາ, ຂຸດຄົ້ນບໍ່ແຮ່ ມີຜົນໄດ້ທາງດ້ານຕົວເລກເງິນ ແລະ ການລົງທຶນ ແຕ່ມາເບິ່ງທາງດ້ານຜົນເສຍ ແລະ ຜົນກະທົບນັ້ນຫລາຍອັນເຫັນວ່າຍັງບໍ່ຈະແຈ້ງ ແລະ ຄວນຈະສຶກສາເບິ່ງຄືນ. ນອກຈາກນັ້ນ, ການຄຸ້ມຄອງ, ກົນໄກໃນການຊຸກຍູ້ການນຳໃຊ້ທີ່ດິນ ເຊິ່ງເປັນປັດໄຈຕົ້ນຕໍບໍ່ວ່າດິນລັດ, ດິນເອກະຊົນເຫັນວ່າປະເທດລາວມີດິນກວ້າງຂວາງ ແລະ ເໝາະສົມໃນການພັດທະນາເສດຖະກິດໃນແຕ່ລະດ້ານ ແຕ່ໃນກົງກັນຂ້າມເຫັນວ່າດິນຫລາຍບ່ອນຫລາຍແຫ່ງຍັງເປັນດິນເປົ່າວ່າງ ຍັງບໍ່ໄດ້ຮັບການພັດທະນາ ຫລືຍັງບໍ່ທັນມີຜົນກະທົບ ໝາຍຄວາມວ່າແຮງງານ ແລະ ທີ່ດິນບໍ່ທັນໄດ້ກະທົບກັນ ຈຶ່ງບໍ່ເກີດເປັນບັນຫາເສດຖະກິດ ຕໍ່ກັບບັນຫາດັ່ງກ່າວ ທ່ານໄດ້ສະເໜີໃຫ້ລັດຖະບານຕ້ອງສ້າງກົນໄກໃນການຊຸກຍູ້ໃຫ້ທ່າແຮງດັ່ງກ່າວ, ມີການພັດທະນາ ຫລື ມີການຂະຫຍາຍໂຕ, ມີການນຳໃຊ້ໃຫ້ເກີດຜົນປະໂຫຍດ ຢາກສະເໜີໃຫ້ລັດຖະບານຂຶ້ນບັນຊີດິນຂອງລັດທີ່ເໝາະສົມໃນການພັດທະນາເສດຖະກິດ ຫລື ກະສິກຳແຕ່ລະແຂວງ, ແຕ່ລະເມືອງ ລວມໄປຮອດບ້ານ ທ່ານກ່າວວ່າ: ເຫັນວ່ານັກລົງທຶນຫລາຍປະເທດ ຫລື ພາຍໃນ ເວລາທີ່ຈະໄປລົງທຶນແທ້ໆໄປຊອກຫາດິນໃນການພັດທະນາກະສິກຳແມ່ນມີຄວາມຫຍຸ້ງຍາກ ບາງເທື່ອກະໄປຫາກະຊວງກ່ຽວຂ້ອງ, ບາງເທື່ອກໍໄປຫາພະແນກການກ່ຽວຂ້ອງ ດິນຕອນນັ້ນຂຶ້ນກັບພະແນກນີ້, ດິນຕອນນັ້ນຂຶ້ນກັບອົງການນີ້ ເຮັດໄປເຮັດມາບໍ່ໄດ້ ດັ່ງນັ້ນ, ດິນຫລາຍແຫ່ງທີ່ໄດ້ຈັບຈອງ ບາງເທື່ອກໍມີບໍ່ໄດ້ພັດທະນາ ໃນເມື່ອດິນບໍ່ໄດ້ພັດທະນາແລ້ວ ເຮັດແນວໃດເສດຖະກິດກໍບໍ່ໄດ້ພັດທະນາ ລວມໄປເຖິງດິນເອກະຊົນຈັບຈອງ ຫລື ເປັນຂອງເອກະຊົນ ແລະ ຫລາຍບ່ອນທີ່ເໝາະສົມໃນການສ້າງເປັນສູນການຄ້າພັດທະນາເສດຖະກິດ ແລະ ອື່ນໆ ແຕ່ກໍຍັງບໍ່ໄດ້ພັດທະນາເທື່ອ ທ່ານໄດ້ຕັ້ງຄຳຖາມວ່າ: ລັດຖະບານເຮົາຈະມີກົນໄກແນວໃດໃນການຊຸກຍູ້ສົ່ງເສີມໃຫ້ດິນດັ່ງກ່າວ, ຈະມີການພັດທະນາ ຫລື ມີການສ້າງລາຍຮັບຈາກການເກັບພາສີອາກອນ, ພາສີທີ່ດິນ ແລະ ສະເໜີວ່າ: ຖ້າດິນທີ່ເໝາະສົມໃນການຜະລິດເປັນອຸດສາຫະກຳແຕ່ບໍ່ໄດ້ພັດທະນາຈັບຈອງໄວ້ລ້າໆ ຄວນຈະເກັບພາສີທີ່ດິນນັ້ນຫລາຍຂຶ້ນທັງຂອງລັດ, ຂອງເອກະຊົນ ຖ້າວ່າມີການພັດທະນາກໍຫລຸດຄ່າພາສີທີ່ດິນນັ້ນລົງ ເພາະວ່າຢາກຊຸກຍູ້ໃຫ້ເຈົ້າຂອງທີ່ດິນນັ້ນມີການພັດທະນາ ເປັນເຈົ້າຂອງທີ່ດິນອາດຈະໃຫ້ຜູ້ອື່ນມາເຊົ່າເພື່ອພັດທະນາໂດຍລາຄາຖືກ ເພາະວ່າເຈົ້າຂອງດິນຈະໄດ້ນະໂຍບາຍພາສີທີ່ດິນ.

2). ການຄຸ້ມຄອງຊັບພະຍາກອນ, ຊັບສິນຂອງລັດທີ່ມີຢູ່ ທ່ານ ປອ. ຄຳແສນ ສີສະວົງ ໄດ້ກ່າວວ່າ: ໄດ້ໄປຫລາຍແຂວງ, ຫລາຍກະຊວງ, ຫລາຍບ່ອນເຫັນວ່າຫລາຍໂຄງລ່າງພື້ນຖານ ບໍ່ວ່າອາຄານສະຖານທີ່ໃນໄລຍະຜ່ານມາພັກ-ລັດໄດ້ລົງທຶນຫລາຍ ແຕ່ກົງກັນຂ້າມບໍ່ມີການຄຸ້ມຄອງ, ການບຸລະນະຮັກສາຈຶ່ງເປ່ເພໄປຊື່ໆ ເມື່ອມາໄລ່ເປັນທາງດ້ານເສດຖະກິດເປັນຕົວເລກແລ້ວ ຖືວ່າຫລາຍແຫ່ງ, ຫລາຍບ່ອນ ບາງອັນບໍ່ຖືກຊົມໃຊ້ ສະນັ້ນປັດໄຈທາງດ້ານເສດຖະກິດລົງທຶນຈຶ່ງບໍ່ກຸ້ມຄ່າ, ບໍ່ໄດ້ໃຊ້.

3). ແຜນສືບຕໍ່ສ້າງນະໂຍບາຍເພື່ອຟື້ນຟູຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບຢູ່ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ເພາະວ່າການກະທົບດັ່ງກ່າວເປັນການກະທົບທີ່ໜັກ ແລະ ຮ້າຍແຮງທີ່ສຸດຕໍ່ກັບຜູ້ປະກອບການຫລາຍທຸລະກິດໄດ້ລົງທຶນໄປແລ້ວ, ໄດ້ກູ້ຢືມໄປແລ້ວແຕ່ກໍບໍ່ໄດ້ດຳເນີນ; ທ່ານ ປອ. ຄຳແສນ ສີສະວົງ ໄດ້ກ່າວຕື່ມວ່າ: ໃນໄລຍະຜ່ານມາ ເຫັນວ່າລັດຖະບານໄດ້ມີນະໂຍບາຍໃຫ້ທະນາຄານບໍ່ທັນເກັບດອກເບ້ຍ ແລະ ອື່ນໆ, ແຕ່ນະໂຍບາຍດັ່ງກ່າວ ເປັນພຽງອົກຊີທີ່ໃສ່ຊົ່ວຄາວ ຢາກໃຫ້ສ້າງກົນໄກອັນໃດອັນໜຶ່ງເພື່ອກະຕຸກຊຸກຍູ້ຟື້ນຟູ ເພື່ອເຮົາຈະໄດ້ກອບກູ້ເອົາບຸກຄະລາກອນ, ພະນັກງານທີ່ຕົກງານກັບມາເຮັດວຽກ ແລະ ເຮັດໃຫ້ທຸລະກິດດັ່ງກ່າວ ດຳເນີນໄປໄດ້ ອາດຈະສ້າງກອງທຶນພິເສດເພື່ອແກ້ໄຂ.

4). ບັນຫາກ່ຽວກັບການຄຸ້ມຄອງອັດຕາແລກປ່ຽນ ແລະ ອັດຕາເງິນເຟີ ທ່ານໄດ້ມີຄຳເຫັນວ່າ: ບົດລາຍງານຂອງລັດຖະບານທີ່ວ່າ ເປີເຊັນກໍສູງສົມຄວນຖ້າທຽບໃສ່ບັນດາປະເທດອາຊຽນທີ່ຢູ່ອ້ອມຂ້າງພວກເຮົາ ເຫັນແລ້ວວ່າສາເຫດທີ່ເພີ່ມຍົກຂຶ້ນຢູ່ໃນບົດລາຍງານນັ້ນກໍເປັນສາເຫດອັນລວມໆ ຈຶ່ງຢາກໃຫ້ມີການສຳມະນາເປັນວິທະຍາສາດຄົ້ນຄວ້າຄັກແນ່ຊອກຫາວິທີການ ໃນການແກ້ໄຂສອງບັນຫາດັ່ງກ່າວ ເຮັດແນວໃດຈະໃຫ້ເງິນກີບທີ່ອ່ອນໂຕຟື້ນຄືນມາ.

ໂອກາດດຽວກັນນີ້, ທ່ານໄດ້ສະເໜີກ່ຽວກັບບັນຫາການສຶກສາ, ການຮຽນການສອນຢູ່ໃນພາວະການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງກະຊວງສຶກສາທິການໄດ້ອອກຄຳສັ່ງ, ອອກແນວທາງເພື່ອໃຫ້ສືບຕໍ່ໃຫ້ການຮຽນການສອນທາງໄກ ບໍ່ວ່າທາງອອນລາຍ ຫລື ຮູບການອື່ນໆ ເພິ່ນກໍໄດ້ສ້າງມາດຕະການ, ເງື່ອນໄຂ ຄູອາຈານກໍມີການຫັນປ່ຽນ ທ່ານໄດ້ກ່າວວ່າ: ບໍ່ຢາກໃຊ້ຄຳວ່າຫັນວິກິດເປັນໂອກາດ ແຕ່ຢາກໃຊ້ຄຳວ່າພວກເຮົາເຖິງເວລາແລ້ວໃນການຫັນປ່ຽນພຶດຕິກຳ, ການຮຽນຮູ້ໃນການດຳລົງຊີວິດແບບໃໝ່ພວກເຮົາຕ້ອງປ່ຽນຮູບການໃນການສຶກສາຮ່ຳຮຽນແລ້ວ ບໍ່ດັ່ງນັ້ນ, ແນວໂນ້ມຂອງການສຶກສາຄົ້ນຄວ້າບໍ່ວ່າຕັ້ງແຕ່ລະດັບອະນຸບານຮອດລະດັບປະລິນຍາເອກຫລາຍປະເທດກໍຫັນໃສ່ການຮຽນທາງໄກ, ຮຽນອອນລາຍອາດຈະມີຫລາຍຢ່າງທີ່ມີຄວາມຫຍຸ້ງຍາກ ຫລາຍຢ່າງທີ່ມີຄວາມສະດວກ ແຕ່ຫລາຍປະເທດຫລາຍທ່ານກໍມີຄຳເຫັນວ່າເປັນໂອກາດທີ່ດີທີ່ສຸດໃນການຄົ້ນຄວ້າ, ການຮຽນອອນລາຍນີ້ສາມາດໃຫ້ພວກເຮົາໄດ້ຮຽນຮູ້ນຳແຫລ່ງການສຶກສາຫລາຍໆບ່ອນໃນຂະນະທີ່ພວກເຮົາໃຊ້ຕົ້ນທຶນຕ່ຳນັ່ງຢູ່ບ່ອນເກົ່າບໍ່ໄດ້ເສຍຄ່າປີ້ຍົນ, ບໍ່ໄດ້ເສຍຄ່າພັກ ແຕ່ໄດ້ສຶກສາຄົ້ນຄວ້າຫລາຍ; ແຕ່ທັງທີ່ມີຄວາມຫຍຸ້ງຍາກໃນປັດຈຸບັນນີ້ ທາງດ້ານເລື່ອງການນຳໃຊ້ອິນເຕີເນັດເປັນປັດໄຈຕົ້ນຕໍໃນການຮຽນອອນລາຍນີ້ ໄລຍະຜ່ານມາກະຊວງສຶກສາກໍໄດ້ຊຸກຍູ້ສົ່ງເສີມໃຫ້ໂຮງຮຽນທີ່ມີເງື່ອນໄຂເປີດການຮຽນການສອນອອນລາຍ ແລະ ຜູ້ປົກຄອງກໍມີຄວາມພໍໃຈຫລາຍໆໂຮງຮຽນໂດຍສະເພາະໂຮງຮຽນເອກະຊົນກໍແມ່ນໄດ້ເລີ່ມການຮຽນການສອນແບບອອນລາຍນີ້ ແຕ່ຄວາມຫຍຸ້ງຍາກອັນໜຶ່ງຢາກສະເໜີລັດຖະບານພິຈາລະນາແກ້ໄຂຊ່ວຍ ກໍຄືເລື່ອງຄ່າອິນເຕີເນັດຍັງສູງ ກໍຢາກາສະເໜີໃຫ້ລັດຖະບານ ຖ້າເປັນໄປໄດ້ມີນະໂຍບາຍຄ່າອິນເຕີເນັດພິເສດໃຫ້ແກ່ຄູ, ອາຈານ ຫລື ນັກຮຽນ, ຖ້າໂຕນີ້ໄດ້ຄິດວ່າການຮຽນແບບໃໝ່ແບບອອນລາຍນີ້ກໍຈະມີຄຸນນະພາບຫລາຍກວ່າເກົ່າ.

ຮຽບຮຽງໂດຍ: ກິ່ງແກ້ວ



# ອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ ແລະ ສສຂ ຫລວງນ້ຳທາ

(ສພຊ) ເພື່ອເປັນການຍົກສູງດ້ານຄວາມຮູ້ຄວາມສາມາດ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ແລະ ພະນັກງານເສນາທິການ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ສຳເລັດຕາມລະດັບຄາດໝາຍ.



ໃນວັນທີ 29-30 ພະຈິກ 2021 ທີ່ເມືອງລອງ ແຂວງຫລວງນ້ຳທາ ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ຮ່ວມກັບອົງການສະຫະປະຊາຊາດເພື່ອການພັດທະນາ ໄດ້ຈັດກອງປະຊຸມເຝິກອົບຮົມກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ແລະ ພະນັກງານຊ່ວຍວຽກ ສສຂ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານ ສພຂ ຫລວງນ້ຳທາ; ເຂົ້າຮ່ວມມີທ່ານ ບຸນຈັນ ສຸດທິປັນຍາ ເລຂາພັກເມືອງເຈົ້າເມືອງໆລອງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສສຊ ປະຈຳເຂດເລືອກຕັ້ງ, ສສຂ, ຜູ້ຊ່ວຍວຽກ ສສຂ ປະຈຳເມືອງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 37 ທ່ານ.

ການເຝິກອົບຮົມຄັ້ງນີ້, ໄດ້ນຳສະເໜີບົດຮຽນກ່ຽວກັບການສ້າງຄວາມເຂົ້າໃຈຕໍ່ກັບບັນດາເປົ້າໝາຍການພັດທະນາແບບຍືນຍົງ ໂດຍຜ່ານທາງລະບົບອອນລາຍ ຈາກສຳມະນາກອນຈາກອົງການສະຫະປະຊາຊົນເພື່ອການພັດທະນາແບບຍືນຍົງ ເຊິ່ງໄດ້ນຳສະເໜີກ່ຽວກັບປະຫວັດ ແລະ ຄວາມເປັນມາໂດຍສັງເຂບ ກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ, ການຈັດຕັ້ງປະຕິບັດກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ, ຄວາມໝາຍຄວາມສຳຄັນຂອງເປົ້າໝາຍການພັດທະນາແບບຍືນຍົງຕໍ່ລັດຖະສະພາ ແລະ ຄວາມສຳຄັນຂອງລັດຖະສະພາຕໍ່ການບັນລຸວາລະປີ 2030 ເພື່ອການພັດທະນາແບບຍືນຍົງ, ນຳສະເໜີບົດຮຽນກ່ຽວກັບການສ້າງນິຕິກຳໃຕ້ກົດໝາຍຂອງແຂວງ ຫລືຂໍ້ຕົກລົງຂອງເຈົ້າແຂວງ, ນຳສະເໜີກ່ຽວກັບມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການພົບປະປະຊາຊົນ ແລະ ບາງບົດຮຽນໃນການພົບປະປະຊາຊົນ; ພ້ອມນັ້ນ, ບັນດາສຳມະນາກອນກໍໄດ້ພ້ອມກັນສົນທະນາ, ແລກປ່ຽນ ແລະ ປະກອບຄຳເຫັນຢ່າງເປັນຂະບວນເພື່ອເປັນການສ້າງຄວາມເຂົ້າໃຈຕໍ່ບັນດາຫົວຂໍ້ດັ່ງກ່າວ. ພ້ອມນັ້ນ, ຍັງໄດ້ນຳສະເໜີບົດຮຽນກ່ຽວກັບວິທີການ ແລະ ຂັ້ນຕອນໃນການລົງຄະແນນສຽງແບບອອນລາຍ ແລະ ບົດຮຽນກ່ຽວກັບວິທີການ ແລະ ຂັ້ນຕອນການສ້າງຫ້ອງປະຊຸມພ້ອມທັງລົງປະຕິບັດຕົວຈິງ.

ຕອນທ້າຍກອງປະຊຸມ, ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບບັນດາທ່ານຜູ້ແທນກອງປະຊຸມທີ່ໄດ້ເຊີດຊູຄວາມຮັບຜິດຊອບສູງ ແລະ ມີຄວາມເປັນເອກະພາບຕໍ່ບັນດາເນື້ອໃນຫົວຂໍ້ທີ່ຍົກຂຶ້ນມາສຳມະນາແລກປ່ຽນ ເຊິ່ງສະແດງອອກເຖິງຄວາມເປັນເຈົ້າການໃນການມີສ່ວນຮ່ວມທີ່ສຳຄັນຂອງ ສສຊ, ສສຂ ໃນການປະຕິບັດໜ້າທີ່ຂອງຕົນໃຫ້ຖືກຕ້ອງຕາມກົດໝາຍກຳນົດໄວ້ ທັງເປັນການຍົກສູງຄວາມສາມາດໃຫ້ບັນດາອົງການອຳນາດລັດຂັ້ນທ້ອງຖິ່ນໄດ້ຮັບຮູ້, ເຂົ້າໃຈຂັ້ນຕອນຕ່າງໆໃນການສ້າງ-ປັບປຸງນິຕິກຳໃຕ້ກົດໝາຍ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງແຂວງ.

(ນາງ ອຳພອນ ສີປະເສີດ)

# ປະເມີນຜົນການຈັດຕັ້ງປະຕິບັດຂອງ ພະນັກງານ-ລັດຖະກອນ ສພຂ ອຸດົມໄຊ ປະຈຳປີ 2021



(ສພຊ) ຕອນເຊົ້າຂອງວັນທີ 8 ທັນວາ 2021 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ມີການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ (ຂັ້ນຄະນະນຳ) ປະຈຳປີ 2021 ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ; ມີບັນດາທ່ານໃນຄະນະປະຈຳ ສພຂ, ຄະນະເລຂາທິການ, ຫົວໜ້າພາຍໃນ ສພຂ ເຂົ້າຮ່ວມ.

ທັງນີ້, ກໍເພື່ອປະຕິບັດຕາມແຈ້ງການຂອງພະແນກພາຍໃນແຂວງ ກ່ຽວກັບການປະເມີນຜົນພະນັກງານ-ລັດຖະກອນ (ຂັ້ນຄະນະນຳ) ປະຈຳປີ 2021 ໃນການຊີ້ນຳ-ນຳພາ, ການຄຸ້ມຄອງພະນັກງານ-ລັດຖະກອນ ໂດຍສະເພາະແມ່ນການປະຕິບັດວຽກງານໃນໜຶ່ງປີຜ່ານມາ, ການປະຕິບັດບັນດານະໂຍບາຍຕໍ່ພະນັກງານ-ລັດຖະກອນ ໄດ້ຈັດຕັ້ງປະຕິບັດຖືກຕ້ອງຕາມແນວທາງຂອງພັກ ແລະ ນະໂຍບາຍຂອງລັດໃນແຕ່ລະໄລຍະແນວໃດ.

ການປະເມີນໄດ້ມີການຜ່ານແຈ້ງການຂອງພະແນກພາຍໃນແຂວງສະບັບເລກທີ 568/ພນ, ລົງວັນທີ 30 ສິງຫາ 2021 ວ່າດ້ວຍການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປະຈຳປີ 2021 ສະບັບເລກທີ 591/ພນ, ລົງວັນທີ 30 ກັນຍາ 2021 ວ່າດ້ວຍການຄັດເລືອກຜົນງານປະຈຳປີ 2021; ສະບັບເລກທີ 653/ພນ, ລົງວັນທີ 27 ກັນຍາ 2021 ວ່າດ້ວຍການຈັດຕັ້ງປະຕິບັດການປະເມີນຜົນຂັ້ນຄະນະພະແນກການ, ອົງການ ປະຈຳປີ 2021 ສະບັບເລກທີ 688/ພນ, ລົງວັນທີ 15 ຕຸລາ 2021 ວ່າດ້ວຍການປະເມີນຜົນພະນັກງານ-ລັດຖະກອນ ປະຈຳປີ 2021 ສະບັບເລກທີ 692/ພນ, ລົງວັນທີ 30 ສິງຫາ 2021 ວ່າດ້ວຍການປະຕິບັດນະໂຍບາຍຕ່າງໆຕໍ່ພະນັກງານ-ລັດຖະກອນ.

ຈາກນັ້ນ, ໄດ້ປະເມີນຜົນພະນັກງານ-ລັດຖະກອນ ປະຈຳປີ 2021 ສາມາດນຳໄປປະຕິບັດຖືກຕ້ອງ ແລະ ສອດຄ່ອງກັບຕົວຈິງ.

(ແສງພອນ ອິນນະລົງ)



## ສຸກສະບາຍຫາຍໂຣຄາ

# ວິທີຄວບຄຸມຄວາມຫິວ ເພື່ອການຫລຸດນໍ້າໜັກທີ່ງ່າຍຂຶ້ນ

# ສາວແວ່ນ



ຄວາມຫິວເປັນອາການທ້ອງຮ້ອງ, ພະລັງງານຕໍ່າ ຫລື ຄວາມກະວົນກະວາຍ ເຊິ່ງມັກຈະເກີດຂຶ້ນໃນເວລາທີ່ຮ່າງກາຍຕ້ອງການພະລັງງານ ເນື່ອງຈາກຄວາມຫິວຄືການຕ້ອງການອາຫານ ດັ່ງນັ້ນ, ໃນຄໍລໍາສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີ 5 ຄໍາແນະນໍາທີ່ດີທີ່ສຸດທີ່ຈະຄວບຄຸມຄວາມຫິວ ແລະ ຈໍາກັດຄວາມຢາກອາຫານ ຖ້າເປົ້າໝາຍຂອງທ່ານແມ່ນການຫລຸດນໍ້າໜັກ ໂດຍການຈໍາກັດແຄລໍລີ.

**1. ໃຊ້ໂປຣຕີນເປັນໂຕກໍາຈັດຄວາມຫິວ**

ທາດໂປຣຕີນກໍາຈັດຫິວໄດ້ ດີກວ່າຄາໂບໄຮເດດ ຫລື ໄຂມັນ ສະນັ້ນ, ຄວນຈະເພີ່ມທາດໂປຣຕີນທີ່ບໍ່ມີໄຂມັນໃນອາຫານແຕ່ລະຄາບ ຫລື ອາຫານຫວ່າງ; ທາດໂປຣຕີນບໍ່ພຽງແຕ່ດີສໍາລັບລະບົບຍ່ອຍອາຫານເທົ່ານັ້ນ ແຕ່ມັນຍັງມີຜົນກະທົບຕໍ່ສານເຄມີໃນສະໝອງ ຊ່ວຍໃຫ້ຮູ້ສຶກພໍໃຈ ແລະ ຈິດໃຈປອດໂປ່ງອີກດ້ວຍ.

**2. ດື່ມນໍ້າ ແລະ ກິນອາຫານທີ່ມີເສັ້ນໃຍຫລາຍ**

ນໍ້າ ແລະ ເສັ້ນໃຍ ບໍ່ມີແຄລໍລີ ແຕ່ການກິນນໍ້າໃນປະລິມານນໍ້າຫລາຍ ແລະ ອາຫານທີ່ມີເສັ້ນໃຍຫລາຍ ຈະຊ່ວຍເຕີມເຕັມພື້ນທີ່ໃນກະເພາະອາຫານ ເຮັດໃຫ້ຮູ້ສຶກອີ່ມ ໂດຍສະເພາະຈໍາພວກຜັກ ແລະ ໝາກໄມ້ (ຍົກເວັ້ນຈໍາພວກແປ້ງ ເຊັ່ນ: ມັນຕົ້ນ, ມັນຝຣັ່ງ ແລະ ຈໍາພວກຖົ່ວ) ມີແຄລໍລີໜ້ອຍເພາະມີນໍ້າ ແລະ ເສັ້ນໃຍຫລາຍ.

**3. ການອອກກໍາລັງກາຍ ສາມາດຊ່ວຍຄວບຄຸມຄວາມຫິວ**

ການອອກກໍາລັງກາຍ ສາມາດລະງັບຮໍໂມນຄວາມຫິວ ເຊິ່ງສາມາດຊ່ວຍຄວບຄຸມຄວາມຢາກອາຫານ ແຕ່ເພື່ອໃຫ້ສາມາດເຮັດກິດຈະກໍາຕ່າງໆໄດ້ ຮ່າງກາຍຈໍາເປັນຕ້ອງໄດ້ຮັບພະລັງງານທີ່ເໝາະສົມ.

**4. ດື່ມນໍ້າເພື່ອຊ່ວຍໃຫ້ທ່ານຮູ້ສຶກຫິວໜ້ອຍ**

ດື່ມນໍ້າລະຫວ່າງກິນອາຫານຈະເຮັດໃຫ້ຮູ້ສຶກອີ່ມໄວຂຶ້ນ ບາງຄົນສັບສົນການຫິວນໍ້າກັບການຫິວອາຫານ ເຖິງແມ່ນວ່າຮ່າງກາຍຈະຫິວນໍ້າ ແຕ່ສຸດທ້າຍກໍເລືອກທີ່ຈະກິນອາຫານແທນ ດັ່ງນັ້ນ, ຖ້າດື່ມນໍ້າພຽງພໍ ກໍຈະກິນໜ້ອຍລົງ.

**5. ກິນອາຫານເທື່ອລະນ້ອຍ ແລະ ກິນເລື້ອຍໆ**

ກິນອາຫານເທື່ອລະນ້ອຍທຸກໆສອງຫາສາມຊົ່ວໂມງ ຈະຊ່ວຍໃຫ້ລະດັບນໍ້າຕານຄົງທີ່ຕະຫລອດມື້ ນີ້ເປັນສິ່ງສໍາຄັນເພາະວ່າລະດັບນໍ້າຕານຕໍ່າຈະເຮັດໃຫ້ຫິວຫລາຍ ແລະ ເຖິງວ່າອາຫານໃນປະລິມານໜ້ອຍອາດຈະບໍ່ພຽງພໍກັບຄວາມຕ້ອງການ ແຕ່ການທີ່ຮູ້ວ່າຈະກິນອີກໃນສອງສາມຊົ່ວໂມງຕໍ່ໄປ ຈະເຮັດໃຫ້ຈັດການຄວາມຫິວໄດ້ງ່າຍຂຶ້ນ.

**ຂໍ້ມູນຈາກ: www.sanook.com**

## ສາລາກະວີ

# ສຽງຈາກດອກໄມ້ປ່າ

# ບົວບານບຶງ

❋ ແຕ່ກ່ອນເນົາແນບເນື້ອ ແນວປ່າພະນາເຂົາ
ໝູ່ກະເລົາຄູນເຫລືອງ ດອກເຮືອງໂຮມດ້າວ
ເຜິ້ງແດງຂາວໝຸ່ຍແຫລ້ ຍວງຍອຍຍ້ອຍຍ່ອນ
ແຂວນຊໍ່ຊອນອາບເອ້ ຮາວຫ້ວຍຮ່ອມຜາ

❋ ເມື່ອໄດ້ມາຢູ່ຢັ້ງ ເນົາຖິ່ນແດນໄກ
ສີແສງໃສໃນເມືອງ ເຮື່ອເຮືອງໂຮງຮ້ານ
ຫໍອາຄານຕຶກຕັ້ງ ໂຮງແຮມກິນດື່ມ
ຍັງໄປ່ລືມດ່ານດ້າວ ຄາວຄັ້ງຜ່ານມາ ນັ້ນແລ້ວ!

❋ ຕອນນັ້ນ ຮຽມຢູ່ປ່າມ່ອນແມ້ງ ແສນຊື່ນສົດໃສ
ຮັບກິ່ນອາຍດອມຝູງ ເຫລົ່າວົງສາເຊື້ອ
ເມື່ອມາເນົາເມືອງພີ້ ມີດີແສນຢ່າງ
ເງິນຊ້ອນອັ່ງຮອງ ກໍດາຍແລ້ວ!

❋ ເມື່ອກ່ອນສຽງນົກຮ້ອງ ມວນໝູ່ປັກຂີ
ງ້ວງອີ່ຝູງເລໄລ ນີ້ນັນເນືອງກ້ອງ
ໂດຍດັ່ງດົນຕີຕ້ອງ ສຽງທອງຟົດສະນັ່ນ
ໃນອະລັ່ນດ່ານດ້າວ ຄາວນັ້ນຊື່ນໃຈ ແທ້ແລ້ວ!

❋ ດຽວນີ້ຫາຍມິດຈ້ອຍ ງອຍນັ່ງໃນຖັງ
ໄດ້ຢູ່ວັງວຽງຫລວງ ຂ່ວງຄາເມບ້ານ
ແສນລໍາລານມີໜ້ອຍ ຄອຍຄະນິງນໍ້າຕາຫລັ່ງ
ຈັ່ງວ່າອຸກອັ່ງແຄ້ນ ແສນເສົ້າໂສກລະທົມ ແທ້ນໍ!

❋ ຍິນແຕ່ລົມພັດອູ້ ລົດແລ່ນທຽວທາງ
ສິ່ງສຽງດັງນັນເນືອງ ເຄື່ອງຄວັນກວນກຸ້ມ
ມໍລະສຸມອາຍຮ້າຍ ກາຍດົມງ້ອງໄງ່
ສັກກຸນາເຜັ່ນຜ້າຍ ສະຫລາຍສິ້ນກິ່ນອາຍ

❋ ຂໍສາຢ່າຍົກຍ້າຍ ດອກໄມ້ປ່າໜີດົງ
ໃຫ້ຄົງຄຽງຄູ່ເຂົາ ຊົ່ວດິນດອນຟ້າ
ໄພພະນາຄືເກົ່າ ແດນລາວດວງເດັ່ນ
ເປັນທີ່ລືຊ່າຍ້ອງ ຜອງເທົ້າໝື່ນອະສົງ ເຈົ້າເອີຍ!



## ທັກທາຍ ລະບາຍ

# ສຽມຫ້ຽນ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິງພິທີການ)*

❋ ***ກະ***ຊວງສາທາລະນະສຸກ ໄດ້ເປີດໃຫ້ບໍລິການສັກວັກຊີນປ້ອງກັນພະຍາດໂຄວິດ-19 **ເຂັມ 3** ແກ່ປະຊາຊົນທົ່ວໄປ ທີ່ຢູ່ໃນເຂດພື້ນທີ່ການທ່ອງທ່ຽວສີຂຽວ ແລະ ບັນດາແຂວງຕາມເສັ້ນທາງລົດໄຟ ທີ່ໄດ້ຮັບວັກຊີນຄົບ 2 ເຂັມ ຢ່າງຕໍ່າ **5 ເດືອນຂຶ້ນໄປ** ເພື່ອສ້າງພູມຕ້ານທານໃຫ້ແກ່ຮ່າງກາຍ ປວງປະຊາບັ່ງຈ້ ລໍຟັງຂ່າວຕິດຕາມກ່ຽວກັບຢາວັກແຊັງ ເພື່ອຫລີກລ່ຽງການຈັດເຊື້ອ ໂລກໂຄວິດ-19 ທີ່ກຸມເຄືອລະບາດແຜ່ ທັງລໍຄອຍຢາຊ່ວຍແກ້ ຢັບຢັ້ງເພື່ອປ້ອງກັນ ***ນັ້ນແລ້ວ!***

❋ *1 **ປີ**ຜ່ານພົ້ນ ຂໍສະແດງຄວາມຊົມເຊີຍ**ນັກຂ່າວສະພາປະຊາຊົນແຂວງທົ່ວປະເທດ** ທີ່ຂະຫຍັນຫັນຫ້າວ ຂຽນຂ່າວສົ່ງໃຫ້ໜັງສືພິມຜູ້ແທນປະຊາຊົນຢ່າງເປັນລະບອບພົດພື້ນ ເຊິ່ງບາງເຂດບາງຄົນອົດທົນຂຽນ ແລະ ສົ່ງມາໃຫ້ທີມງານກົມສື່ມວນຊົນຂອງພວກເຮົາ ໃນ**ໂມງເລີກການ**ກໍ່ມີ ສຸດທີ່ດີໃຈລົ້ນ ເຫັນຫລາຍຄົນເອົາໃຈໃສ່ ຂຽນເນື້ອໃນກ່າວອ້າງ ຜົນງານສ້າງເຂດຕົນ ຈົນບໍ່ເຊີນຊາດແທ້ງ ເນື້ອຂ່າວການເຄື່ອນໄຫວ ອອກໃຫ້ລຽນທຸກສະບັບ ບໍ່ປ່ອຍປະວາງໄວ້ ເນື້ອທີ່ໜັງສືພິມໃຫ້ ເຂດໃດຈັບຈອງ ຄອງແຊ້ມເຊີຍຂ່າວເນື້ອ ຜົນງານອ້າງອຽກເຄື່ອນໄຫວ **(ຊົມເຊີຍ)** ຂໍທັກທາຍເພີ່ນຜູ້ ເຫັນທ່າງການຂຽນ ຄັນຢູ່ດີມີແຮງ ໃຫ້ໝັ່ນຂຽນທະຍອຍໃຫ້ ໜັງສືພິມຜູ້ແທນປະຊາຊົນໄດ້ ບັນທຶກບານຂຽນຊື່ **ແດ່ທ້ອນ!** ຢ່າໄດ້ປະປ່ອຍໃຫ້ ໜັງສືພິມເສົ້າຫງ່ອມເຫງົາ **ທ່ານເອີຍ!***

❋ *__ສະ__ແດງຄວາມເສຍໃຈນໍາຄອບຄົວອ້າຍ**ອາບຸສອນ ພູມມີທອນ** ກົມສື່ມວນຊົນ ສະພາແຫ່ງຊາດ ທີ່ໄດ້ສູນເສຍ**ບິດາ**ໃນທ້າຍອາທິດທີ່ຜ່ານມາ ຄົນສະພາທົ່ວໜ້າ ຮຽງຮ່ວມອາໄລ ຂໍໃຫ້ຄຸນຄວາມດີ ທີ່ບິດາກະທໍາສ້າງ ນໍາສົ່ງເຍືອງທາງໃຫ້ ວິນຍານໄປທະຍານສູ່ສອງສະຫວັນຊັ້ນຟ້າ ແດນເບື້ອງເພີນເລົ່າລື **ພຸ້ນເດີ!***

## ຊວນຍິ້ມ

# ທ້າວພູ

**ເລື່ອງ: ສິ່ງທີ່ໄດ້ກັບມາ**

ຊາຍຄົນໜຶ່ງໄປຢາມໝູ່ເກົ່າ ໃນຕອນທີ່ສົນທະນາກັນຢູ່ນັ້ນ ມີຜູ້ສາວຄົນໜຶ່ງຍ່າງເຂົ້າມາໃນຫ້ອງ

- ປະລິນຍາ ໄປເອົານໍ້າໃຫ້ພໍ່ແດ່

+ ປະລິນຍາຫວາ! ມຶງຄືຕັ້ງຊື່ລູກແບບນີ້?

- ກູສົ່ງລູກໄປຮຽນຢູ່ມະຫາວິທະຍາໄລຕ່າງປະເທດ ແລະ ນັ້ນຄືສິ່ງທີ່ລູກກູໄດ້ກັບມາເຮືອນ

!!!!!!!!!!!



## ຄະຕິເຕືອນໃຈ

# ດອກຫຍ້າ

**ຢ່າລົບລູ່ຄຸນຄົນ**
**ຢ່າຖືຕົນເປັນໃຫຍ່**




# ໂຕກຽວຈະອະນຸຍາດໃຫ້ເພດດຽວກັນຈົດທະບຽນສົມລົດໄດ້ຕາມກົດໝາຍໃນປີໜ້າ

# ນາງ ປາກາລັກ ພົມມີໄຊ




*ເຈົ້າຄອງນະຄອນຫລວງໂຕກຽວ ກ່າວວ່າ ການປົກຄອງໂຕກຽວຈະອະນຸຍາດໃຫ້ຜູ້ມີເພດດຽວກັນແຕ່ງດອງກັນຕາມກົດໝາຍ ເລີ່ມແຕ່ປີໜ້າເປັນຕົ້ນໄປ.*

ອີງຕາມການລາຍງານຂ່າວໃນອາທິດຜ່ານມາ ໃຫ້ຮູ້ວ່າ: ທ່ານ ນາງ ຢູຣິໂກະ ໂຄອິເກະ ເຈົ້າຄອງນະຄອນຫລວງໂຕກຽວ ປະເທດຍີ່ປຸ່ນ ໄດ້ກ່າວວ່າ ການປົກຄອງຂອງນະຄອນຫລວງໂຕກຽວ ທີ່ມີປະຊາກອນສູງເຖິງ 14 ລ້ານຄົນ ວາງແຜນທີ່ຈະເລີ່ມນຳໃຊ້ກົດໝາຍການຄອງຄູ່ຂອງຄູ່ຮັກເພດດຽວກັນ ຫລັງຈາກປະຊາຊົນໂຕກຽວຮຽກຮ້ອງໃຫ້ດຳເນີນການດັ່ງກ່າວ ເຊິ່ງຈະມີຜົນບັງຄັບໃຊ້ແຕ່ເດືອນເມສາ 2022.

ເຈົ້າຄອງນະຄອນຫລວງໂຕກຽວ ກ່າວວ່າ: ຜ່ານການສຳພາດກັບກຸ່ມຄົນທີ່ມີຄວາມຫລາກຫລາຍທາງເພດ ແລະ ຈາກການສຳຫລວດຕອບແບບສອບຖາມໃນກຸ່ມປະຊາກອນໂຕກຽວ ມີປະຊາຊົນຈຳນວນຫລວງຫລາຍໄດ້ສະແດງຄວາມຄິດເຫັນວ່າຄວນມີການໃຊ້ກົດໝາຍຮັບຮອງຄູ່ຊີວິດເພດດຽວກັນໄດ້ແລ້ວ.

ບາງເຂດໃນໂຕກຽວ ແລະ ເທສະບານໃນແຂວງອື່ນໆຂອງຍີ່ປຸ່ນ ໄດ້ເລີ່ມປະຕິບັດກົດໝາຍທີ່ຄ້າຍຄືກັນກ່ອນໜ້ານີ້ແລ້ວ ເຊິ່ງຈະເຮັດໃຫ້ຄູ່ຮັກເພດດຽວກັນໄດ້ຮັບການຍອມຮັບຢ່າງຖືກກົດໝາຍຄືກັບຄູ່ແຕ່ງດອງຕ່າງເພດ ແຕ່ກໍມີນັກວິຈານວ່າ ຄູ່ຮັກເພດດຽວກັນຍັງປະເຊີນກັບຂໍ້ເສຍປຽບທາງດ້ານກົດໝາຍຫລາຍປະການ ເຊັ່ນ ການຈ່າຍຄ່າພາສີ ເຖິງແມ່ນວ່າເຂົາເຈົ້າແຕ່ງດອງກັນຢ່າງຖືກຕ້ອງຕາມກົດໝາຍກໍຕາມ.

ສານທ້ອງຖິ່ນໃນເມືອງຊັບໂປໂຣ ໃນຕອນເໜືອຂອງຍີ່ປຸ່ນ ຫາກໍໄດ້ຕັດສິນຄະດີໄປໃນເດືອນມີນາຜ່ານມາວ່າ ບໍ່ອະນຸຍາດໃຫ້ຄົນຮັກເພດດຽວກັນແຕ່ງດອງກັນໄດ້ ເພາະວ່າ "ບໍ່ມີຢູ່ໃນລັດຖະທຳມະນູນ" ເຊິ່ງເປັນກໍລະນີທຳອິດທາງດ້ານກົດໝາຍຕໍ່ຄູ່ຮັກເພດດຽວກັນ.

ທ່ານ ນາງ ຢູຣິໂກະ ໂຄອິເກະ ກ່າວວ່າ "ພວກເຮົາຈະພິຈາລະນາການອອກກົດໝາຍໃຫ້ສາມາດຮອງຮັບປະຊາຊົນຈຳນວນຫລາຍ ເຊິ່ງຈະຊ່ວຍຫລຸດຜ່ອນບັນຫາໃນຊີວິດປະຈຳວັນ ແລະ ສົ່ງເສີມຄວາມເຂົ້າໃຈກ່ຽວກັບຄວາມຫລາກຫລາຍທາງເພດໃນໂຕກຽວ".

ຕາມຂໍ້ມູນຈາກການປົກຄອງນະຄອນຫລວງໂຕກຽວ ໃນປະເທດຍີ່ປຸ່ນ, ມີ 5 ເຂດ ທີ່ໄດ້ນຳສະເໜີກົດໝາຍວ່າດ້ວຍການແຕ່ງດອງຂອງເພດດຽວກັນ.

**ແຫລ່ງຂໍ້ມູນ: www.japantimes.co.jp**




# ນາຍົກອັງກິດ ຮຽກຮ້ອງໃຫ້ລັດຖະສະພາອະນຸມັດແຜນການ B

# ນາກ ເມືອງມະໂນ

ໃນວັນຈັນທີ 13 ທັນວາຜ່ານມາ, ໄດ້ມີການລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ບໍຣິສ ຈອນຊັນ ນາຍົກລັດຖະມົນຕີອັງກິດ ຮຽກຮ້ອງໃຫ້ລັດຖະສະພາອັງກິດອະນຸມັດແຜນການ B ໃນການລົງຄະແນນສຽງໃນວັນທີ 14 ທັນວານີ້ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ສາຍພັນໂອມິຄຣອນ.

ທ່ານ ບໍຣິສ ຈອນຊັນ ກ່າວວ່າ: ບັນດາສະມາຊິກລັດຖະສະພາທີ່ກຳລັງຄິດທີ່ຈະຍົກເລີກມາດຕະການດັ່ງກ່າວ ທ່ານຄວນຄຳນຶງວ່າທ່ານບໍ່ຄວນນິ່ງນອນໃຈໃນການຈັດການກັບເຊື້ອພະຍາດໂຄວິດ-19.

ນາຍົກລັດຖະມົນຕີອັງກິດຍັງໄດ້ຢືນຢັນວ່າ ຄົນເຈັບໂຄວິດ-19 ຄົນນຶ່ງໃນປະເທດອັງກິດໄດ້ເສຍຊີວິດຫລັງຈາກຕິດເຊື້ອພະຍາດສາຍພັນໂອມິຄຣອນ ເຊິ່ງຄົນເຈັບຄົນນີ້ຖືວ່າເປັນຄົນເຈັບໂຄວິດ-19 ຄົນທຳອິດໃນປະເທດອັງກິດທີ່ເສຍຊີວິດຍ້ອນສາຍພັນນີ້.

ລັດຖະບານອັງກິດຢາກເພີ່ມທະວີມາດຕະການເຄັ່ງຄັດເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ພາຍຫລັງໄດ້ພົບເຫັນຈຳນວນຜູ້ຕິດເຊື້ອໂຄວິດ-19 ສືບຕໍ່ເພີ່ມຂຶ້ນ, ປັດຈຸບັນອັງກິດມີຜູ້ຕິດເຊື້ອໂຄວິດ-19 ຫລາຍກວ່າ 10,8 ລ້ານຄົນ ເຊິ່ງເປັນຕົວເລກທີ່ສູງເປັນອັນດັບ 4 ຂອງໂລກທັດຈາກສະຫະລັດ, ອິນເດຍ ແລະ ບຣາຊິນ, ໃນຂະນະທີ່ຈຳນວນຜູ້ເສຍຊີວິດແມ່ນເກີນ 146.000 ຄົນ.

ທັງນີ້, ການປະກາດມາດຕະການຂອງແຜນການ B ຈະໃຫ້ປະຊາຊົນໄປເຮັດວຽກຈາກເຮືອນ ແລະ ຕ້ອງມີການສະແດງພາດສະປອດໂຄວິດ ກ່ອນທີ່ຈະເຂົ້າໄປໃນສະຖານທີ່ທີ່ແອອັດ ເຊັ່ນ ການແຂ່ງຂັນບານເຕະ ຫລື ການສະແດງດົນຕີ.

**ແຫລ່ງຂ່າວ: RYT9**






